# ໂອກາດທີ່ສູນເສຍໄປ:
# ຄຳແນະນຳເພື່ອການສືບສວນສອບສວນໃນກໍລະນີການຫາຍ
# ສາບສູນຂອງທ່ານສົມບັດ ສົມພອນ



International
Commission
of Jurists

## ຄະນະກຳມາທິການກົດໝາຍສາກົນ

ຄະນະກຳມາທິການປະກອບດ້ວຍນັກກົດໝາຍ ແລະ ຜູ້ພິພາກສາທີ່ມີຊື່ສຽງ 60 ທ່ານທີ່ມາຈາກທຸກພາກພື້ນໃນທົ່ວໂລກ, ຄະນະກຳ ມາທິການກົດໝາຍສາກົນແມ່ນໃຫ້ການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໂດຍອີງຕາມລະບຽບກົດໝາຍ, ນຳໃຊ້ ຄວາມຮູ້ຄວາມ ສາມາດ ທາງດ້ານກົດໝາຍທີ່ເປັນໜຶ່ງດຽວເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະ ບົບຍຸຕິທຳສາກົນ ແລະ ລະບົບພາຍໃນປະເທດ. ຄະນະກຳມາທິການໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1952 ແລະ ກໍ່ມີບົດບາດໃນ ການປະຕິບັດໜ້າທີ່ຢ່າງຕັ້ງໜ້າ ຢູ່ໃນ 5 ທະວີບ, ຈຸດປະສົງຂອງຄະນະກຳມາທິການກົດໝາຍສາກົນກໍແມ່ນເພື່ອຮັບປະກັນ ຄວາມກ້າວໜ້າໃນການພັດທະນາ ແລະ ການຈັດຕັ້ງປະຕິບັດກົດໝາຍສາກົນວ່າດ້ວຍສິດທິມະນຸດ ແລະ ມະນຸດສະທຳໃຫ້ມີປະ ສິດທິພາບ; ຮັບປະກັນໃຫ້ມີການຍອມຮັບ ບັນດາສິດທິທາງ ດ້ານພົນລະເຮືອນ, ວັດທະນາທຳ, ເສດຖະກິດ, ການເມືອງ ແລະ ສັງຄົມ; ໃຫ້ການປົກປ້ອງການແຍກອຳນາດ; ແລະ ຮັບປະກັນຄວາມ ເປັນເອກະລາດໃຫ້ແກ່ນັກວິຊາຊີບ ທາງດ້ານກົດໝາຍ ແລະ ຕຸລາການ.

icj
International
Commission
of Jurists

© ລິຂະສິດ ເດືອນທັນວາ ປີ 2014
ຮູບພາບທຸກຢ່າງທີ່ສະແດງໃນບົດລາຍງານນີ້ແມ່ນໄດ້ມາຈາກເວັບໄຊ http://sombath.org/
ຮູບພາບແຜນທີ່ກໍ່ແມ່ນໄດ້ມາຈາກ Google Maps.

ຄະນະກຳມາທິການກົດໝາຍສາກົນ ອະນຸຍາດໃຫ້ ມີການປັບປ່ຽນເນື້ອຂອງບາງຢ່າງໃນບົດລາຍງານໄດ້ໃນກໍລະນີຖ້າຫາກໄດ້ຮັບການເຫັນດີ ແລະ ຕອ້ງກອ໋ບປີ້ສິ່ງທີ່ພິມ ເພີ່ມເຕີມນັ້ນແລ້ວສົ່ງໃຫ້ແກ່ສຳນັກງານໃຫ່ຍຕາມທີ່ຢູ່ຂ້າງລຸ່ມນີ້:

P.O. Box 91
33 Rue des Bains, Geneva, Switzerland
Email: info@icj.org
www.icj.org

# ໂອກາດທີ່ສູນເສຍໄປ:
# ຄໍາແນະນໍາເພື່ອການສືບສວນສອບສວນໃນກໍລະນີການຫາຍສາບສູນ
# ຂອງທ່ານ ສົມບັດ ສົມພອນ

ບົດລາຍງານນີ້ໄດ້ຖືກຂຽນຂຶ້ນໂດຍ ທ່ານ Kingsley Abbott ທີ່ປຶກສາທາງກົດໝາຍຂອງ ຄະນະ ກຳມາ ທິການກົດໝາຍສາກົນ ແລະ ທ່ານ Michael Taylor QPM ທີ່ປຶກສາດ້ານການສືບສວນ ສອບສວນສາກົນ, ໄດ້ຮັບ ການກວດແກ້ໂດຍທ່ານ Jill Heine ທີ່ປຶກສາອາວຸໂສດ້ານກົດໝາຍ ແລະ ນະໂຍ ບາຍຂອງ ຄະນະກຳມາ ທິການກົດໝາຍ ສາກົນ, ທ່ານ Sam Zarifi ຜູ້ອຳນວຍການຂອງຄະນະກຳມາທິການກົດໝາຍສາກົນພາກພື້ນອາຊີປາຊີຟິກ, ແລະ ທ່ານ Leong Tsu Quin ຮອງທີ່ປຶກສາດ້ານກົດໝາຍສາກົນ.

**ທ່ານ Michael Taylor QPM**

ທ່ານ Michael Taylor QPM ມີປະສົບການເປັນຕຳຫຼວດນະຄອນບານປະຈຳນະຄອນລອນ ດອນ ປະເທດ ອັງກິດ ເປັນເວລາ 30 ປີ. ມີປະສົບການໃນການສືບສວນສອບສວນໃນທຸກລະດັບ–ຈົນຮອດລະດັບຫົວ ໜ້າຜູ້ອຳນວຍການມາ ເປັນເວລາ 26 ປີ, ນອກນີ້ ທ່ານ Taylor ຍັງມີປະສົບການໃນການສືບສວນສອບສວນບັນ ຫາການກະທຳຜິດຕ່າງໆ ບໍ່ວ່າຈະເປັນການຄາດຕະກຳ, ການຂົ່ມຂືນ, ການລ່ວງລະເມີດທາງເພດ, ການລັກພາຕົວ, ການຂົ່ມຂູ່, ແລະ ການກໍ່ການຮ້າຍ.

ທ່ານ Taylor ຍັງເຄີຍເປັນຫົວໜ້າການສືບສວນສອບສວນຄະດີສະເພາະກິດຢູ່ປະເທດເລບານອນມາເປັນເວລາ 4 ປີ, ເປັນຜູ້ນຳພາທີມງານ 75 ທ່ານ ໃນການສືບສວນສອບສວນຄະດີຄາດຕະກຳທ່ານ Rafik Hariri ອະດີດນາຍົກ ລັດຖະມົນຕີຂອງປະເທດເລບານອນ.

ອີງຕາມກົດໝາຍ ແລະ ຄວາມເປັນຈິງທີ່ກ່າວມາໃນວັນທີ 3 ເດືອນ ທັນວາ ປີ 2014

ຄະນະກຳມາທິການກົດໝາຍສາກົນຍອມຮັບເຖິງຄວາມກ້າຫານ ແລະ ຄວາມອົດທົນພະຍາຍາມຂອງ ທ່ານນາງ Ng Shui Meng ແລະ ທາງຄະນະກຳມາທິການຂໍຂອບໃຈຕໍ່ກັບຄວາມເປີດໃຈກວ້າງກົງ ໄປກົງມາ ແລະ ໃຫ້ການຊ່ວຍເຫຼືອສະໜັບສະໜູນພາກປະຊາສັງຄົມຢ່າງຕໍ່ເນື່ອງຢູ່ໃນ ສປປ ລາວ.

## ທີ່ມາຂອງເລື່ອງ

ທ່ານ ສົມບັດ ສົມພອນ ເກີດທີ່ແຂວງຄຳມ່ວນ ສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ເມື່ອ ວັນທີ່ 17 ເດືອນກຸມພາ 1952, ທ່ານເປັນຜູ້ກໍ່ຕັ້ງ ແລະ ເປັນອາດີດຜູ້ອຳນວຍການສູນອົບຮົມຮ່ວມພັດທະນາ (PADETC) ທີ່ຈົດທະບຽນຂຶ້ນກັບກະຊວງສຶກສາທິການ ເປັນອົງການທີ່ຖືກຮັບຮູ້ກັນວ່າເປັນຜູ້ໃຫ້ການສະໜັບ ສະໜູນການສຶກສາ ແລະ ການພັດທະນາໄວໜຸ່ມ.

ທ່ານສົມບັດ ໄດ້ຮັບລາງວັນກຽດຕິຍົດໃນລະດັບ ພາກພື້ນ 2 ລາງວັນໃນນາມນັກການປະຕິບັດ ໜ້າທີ່ທີ່ເດັ່ນຄື: ລາງວັນ ການພັດທະນາຊັບພະຍາກອນມະນຸດຈາກຄະນະ ກຳມາທິການເສດຖະກິດ ແລະ ສັງຄົມຂອງອົງການສະ ຫະປະຊາຊາດໃນຂົງເຂດ ອາຊີປາຊີຟິ (2001), ແລະ ລາງວັນ Ramon Magsaysay ດ້ານນັກພັດທະນາຊຸມຊົນດີເດັ່ນ (2005).

ອີງຕາມພາບບັນທຶກໃນກ້ອງວົງຈອນປິດ (CCTV) ຂອງເຈົ້າໜ້າ ທີ່ຕຳຫຼວດທີ່ຕິດຕັ້ງ ໃກ້ກັບປ້ອມຕຳຫຼວດບ່ອນເກີດເຫດໃນວັນທີ 15 ເດືອນທັນວາ ປີ 2012, ທີ່ນະຄອນຫຼວງວຽງຈັນ ສປປ ລາວ ໄດ້ສະແດງໃຫ້ເຫັນເຫດການການລັກພາຕົວທ່ານ ສົມບັດ ສົມພອນ ຢູ່ທີ່ປ້ອມຕຳຫຼວດ ດັ່ງກ່າວໂດຍມີຕົວແທນເຈົ້າໜ້າທີ່ຂອງລັດ ຫຼື ດ້ວຍການຮູ້ເຫັນເປັນໃຈ ຫຼື ຍ້ອນຄວາມເມີນເສີຍ ຕໍ່ເຫດການຂອງເຈົ້າໜ້າທີ່. ຕັ້ງແຕ່ນັ້ນມາ ກໍ່ບໍ່ເຫັນ ທ່ານສົມບັດສົມພອນອີກເລີຍ.

ນັບຕັ້ງແຕ່ທ່ານ ສົມບັດ ສົມພອນໄດ້ຫາຍສາບສູນໄປ, ທາງເຈົ້າໜ້າທີ່ຂອງ ສປປ ລາວ ກໍ່ບໍ່ໄດ້ ໃສ່ໃຈຮັບຮູ້ການສູນເສຍສິດເສລີພາບຂອງທ່ານ ແລະ ກໍ່ບໍ່ໄດ້ຕອບສະໜອງຂໍ້ມູນຂ່າວສານກ່ຽວກັບຊະ ຕາກຳ ແລະ ເງື່ອນງຳທີ່ກ່ຽວຂ້ອງກັບທ່ານ ສົມບັດ ສົມພອນແຕ່ຢ່າງໃດ.

ເຖິງວ່າເຈົ້າໜ້າທີ່ໄດ້ ລາຍງານກ່ຽວ ກັບການດຳເນີນການສືບສວນ ສອບສວນຫາຕົ້ນປາຍສາຍເຫດກໍ່ຕາມ, ແຕ່ວ່າຂໍ້ມູນທີ່ ໄດ້ຈາກເຈົ້າ ໜ້າທີ່ນັ້ນກໍ່ແມ່ນມີຈຳກັດຫຼາຍເຖິງວ່າໄດ້ມີ ການຮຽກຮ້ອງຂໍຂໍ້ມູນນັ້ນເປັນປະຈຳຕໍ່ກັບ ບັນຫາການຫາຍ ສາບ ສູນຂອງທ່ານ ສົມບັດສົມພອນ.

ຕາມບົດລາຍງານຂອງເຈົ້າໜ້າທີ່ຕຳຫຼວດຄັ້ງສຸດທ້າຍກ່ຽວກັບການສືບສວນສອບສວນກໍ່ແມ່ນໄດ້ສ້າງ ຂຶ້ນມາເປັນດົນນານກ່ວາ 18 ເດືອນມາແລ້ວ, ສ້າງຂຶ້ນມາຕັ້ງແຕ່ວັນທີ 08 ເດືອນ ມິຖຸນາ ປີ 2013.

ດັ່ງນັ້ນ, ພັນລະຍາຂອງທ່ານ ສົມບັດ ຄື ທ່ານນາງ Ng Shui Meng ແລະ ສັງຄົມກໍ່ບໍ່ສາມາດ ເຂົ້າເຖິງຂໍ້ມູນຄວາມເປັນຈິງທີ່ເກີດຂຶ້ນກັບທ່ານສົມບັດ ວ່າເກີດຫຍັງຂຶ້ນແທ້ ແລະ ທ່ານ ສົມບັດຢູ່ໃສ.

ອີງຕາມຂໍ້ມູນຂ່າວສານທີ່ມີຂອງຄະນະກຳມາທິການກົດໝາຍສາກົນ, ຄະນະກຳມາທິການເຫັນວ່າ ທ່ານ ສົມບັດ ສົມພອນ ແມ່ນຕົກໃນກໍລະນີການຖືກບັງຄັບໃຫ້ຫາຍສາບສູນ.

ຕໍ່ກັບບັນຫາທີ່ກ່ຽວຂ້ອງກັບຊາຕາກຳ ແລະ ການຫາຍສາບສູນຂອງທ່ານ ສົມບັດ ສົມພອນ ບວກກັບ ການຂາດຂໍ້ມູນຈາກການສືບສວນສອບສວນ ມັນໄດ້ສ້າງສຽງຮຶຮາໃຫ້ແກ່ສັງຄົມທັງຢູ່ພາຍໃນ ແລະ ສາກົນ, ໂດຍສະເພາະແມ່ນຢູ່ວົງໃນສະພາສິດທິມະນຸດ ຂອງອາຊຽນເມື່ອບໍ່ດົນມານີ້ (APHR).

ອີງຕາມການເຂົ້າຮ່ວມກອງປະຊຸມຫຼາຍຄັ້ງກັບເຈົ້າໜ້າທີ່ທາງການລາວ ທີ່ຈັດຂຶ້ນໃນລະຫວ່າງ ວັນທີ 15 ຫາ 20 ກັນຍາ 2014, ທາງສະພາສິດທິມະນຸດອາຊຽນໄດ້ລາຍງານວ່າສະພາໄດ້ເຫັນ "ສັນຍານຂອງ ຄວາມມິດງຽບ" ອີງຕາມຂໍ້ມູນທີ່ສະຫຼຸບມາຈາກໜ່ວຍຂ່າວກອງພິເສດກໍ່ພໍທີ່ຈະລົງຄວາມເຫັນໄດ້ວ່າ "ອັນທີ່ຈິງ ແລ້ວບັນຫາທີ່ເກີດຂຶ້ນກໍ່ແມ່ນທາງການລາວບໍ່ເຄີຍໄດ້ສືບສວນສອບສວນແຕ່ຢ່າງໃດ ແລະ ຍັງໄດ້ມີຄວາມພະ ຍາຍາມຂອງເຈົ້າໜ້າທີ່ທີ່ຈະປົກປິດເລື່ອງລາວ ທີ່ເກີດຂຶ້ນກ່ຽວກັບການລັກພາຕົວອີກດ້ວຍ"



ທ່ານ ສົມບັດ ໄດ້ຮັບລາງວັນກຽດຕິຍົດ Ramon Magsaysay ດ້ານຜູ້ນຳທາງຊຸມຊົນ ປີ 2005

## ວັດຖຸປະສົງຂອງບົດລາຍງານ

ຄະນະກຳມາທິການກົດໝາຍສາກົນໄດ້ປຶກສາຫາລືກັບຜູ້ຊ່ຽວຊານດ້ານນິຕິວິທະຍາຂັ້ນນຳຂອງສາກົນຄືທ່ານ Michael Taylor QPM, ເພື່ອດຳເນີນການກວດສອບທາງດ້ານວັດຖຸທີ່ມີກ່ຽວກັບຄະດີຂອງ ທ່ານສົມບັດສົມພອນ, ການກວດສອບລວມມີສະພາບການຂອງການຫາຍຕົວໄປຂອງທ່ານ ສົມບັດ ແລະ ການໃຫ້ການຮ່ວມມືຂອງລັດຖະບານເພື່ອທຳການວິເຄາະຫາຄວາມຈິງໂດຍອີງໃສ່ມາດຕະ ຖານສາກົນທີ່ກ່ຽວຂ້ອງ ແລະ ເພື່ອປະຕິບັດໜ້າທີ່ໃຫ້ມີປະສິດທິພາບຂື້ນຕື່ມ.

ວັດຖຸປະສົງຂອງບົດລາຍງານນີ້ກໍ່ແມ່ນເພື່ອໃຫ້ຄຳແນະນຳກ່ຽວກັບຂັ້ນຕອນການສືບ ສວນສອບສວນທີ່ຄວນໄດ້ຮັບການຈັດຕັ້ງປະຕິບັດເພື່ອວ່າການດຳເນີນການສືບສວນສອບສວນຈະຖືກດຳເນີນໄປຕາມມາດຕະຖານສາກົນ.

ການໃຫ້ຄຳແນະນຳແມ່ນອີງໃສ່ປະສົບການ ແລະ ການປະຕິບັດໜ້າທີ່ທີ່ຜ່ານມາຢ່າງມີປະ ສິດທິພາບໃນສາກົນຂອງທ່ານ Michael Taylor QPM ແລະ ອີງຕາມກົນໄກທີ່ໄດ້ກຳນົດໃນອານຸສັນຍາ ອິສຕັນບູ Istanbul ແລະ ຄູ່ມືການສືບສວນສອບສວນ ແລະ ການປົກປ້ອງທີ່ມີປະສິດທິພາບຂອງອົງການສະຫະປະ ຊາຊາດວ່າດ້ວຍການດຳເນີນ ການທາງກົດໝາຍແບບພິເສດ, ການຕັດສິນ ແລະ ການສະຫຼຸບສຳນວນຄະດີ (ລວມມີຫຼັກການທີ່ກ່ຽວຂ້ອງກັບຄະດີການບັງຄັບໃຫ້ຫາຍສາບສູນຂອງບຸກຄົນທີ່ຕ້ອງສົງໃສ).

## ການໃຫ້ຄວາມເຫັນຂອງຜູ້ຊ່ຽວຊານ

ເຖິງແມ່ນວ່າຈະມີບັນຫາ ແລະ ສິ່ງທ້າທາຍຕ່າງໆທີ່ຂຽນໃນບົດລາຍງານນີ້, ແຕ່ວ່າຄະດີທີ່ກ່າວມານີ້ແມ່ນມີຄວາມ ເປັນ ໄປໄດ້ສູງທີ່ຈະຫາວິທີແກ້ໄຂໄດ້.

ມີຫຼາຍໆຄວາມເຫັນທີ່ໃຫ້ທັດສະນະວ່າຄວາມເປັນໄປໄດ້ໃນການແກ້ໄຂກໍ່ແມ່ນຕ້ອງມີການຈັດຕັ້ງປະຕິບັດຢ່າງຈິງຈັງ ແລະ ມີຄວາມຕັ້ງໃຈຢ່າງແທ້ຈິງໃນການຊອກຫາຄວາມຈິງທີ່ເກີດຂື້ກັບທ່ານ ສົມບັດ ສົມພອນ ພ້ອມທັງຕ້ອງຊອກ ຫາຜູ້ທີ່ມີສ່ວນຮ່ວມໃນການກະທຳຜິດມາຮັບຜິດຊອບ.

ໃນກໍລະນີທີ່ມີການນຳເອົາບັນດາຄຳແນະນຳທີ່ມີໃນບົດລາຍງານນີ້ໄປຈັດຕັ້ງປະຕິບັດຢ່າງຈິງຈັງ ແລະ ເຂັ້ມງວດມັນ ກໍ່ຈະຊ່ວຍໃນການແກ້ໄຂບັນຫາການຮ້ອງຟ້ອງທາງດ້ານສິດທິມະນຸດທີ່ຂໍໃຫ້ມີການສືບສວນສອບສວນຄົ້ນຫາທ່ານ ສົມ ບັດ ສົມພອນ ແລະ ກໍ່ສາມາດຊ່ວຍໃຫ້ມີການດຳເນີນຄະດີຕໍ່ຜູ້ທີ່ມີສ່ວນຮັບຜິຊອບມາລົງໂທດເກີດ ຂື້ນໄດ້.

ເຖິງວ່າເວລາຈະຜ່ານໄປ ແລະ ມີໂອກາດທີ່ເລືອນລາງ, ແຕ່ກໍ່ຍັງມີປັດໃຈທີ່ເປັນໄປໄດ້ຫຼາຍຢ່າງໂດຍສະເພາະ ແມ່ນຈາກການກວດສອບຂໍ້ມູນຄືນໃໝ່. ເຖິງຢ່າງໃດກໍ່ດີ, ສິ່ງທີ່ເປັນໄປໄດ້ຫຼາຍທີ່ສຸດກໍ່ແມ່ນຂື້ນຢູ່ກັບຈຸດຢືນ ແລະ ທ່າທີຂອງທາງການລາວຫລາຍກ່ວາ.

ຕາມການຕັ້ງສົມມຸດຕິຖານກໍ່ຄືວ່າເຈົ້າໜ້າທີ່ຂອງລັດແມ່ນໄດ້ມີສ່ວນຮ່ວມໃນການກະທຳຜິດດ້ານການເຮັດໃຫ້ບຸກຄົນ ຫາຍຕົວໄປ, ສິ່ງທີ່ເປັນໄປໄດ້ໃນການຊອກຫາຄວາມຈິງກໍ່ແມ່ນຈະຕ້ອງໄດ້ຈາກການຈັດຕັ້ງການສືບສວນສອບສວນທີ່ ຈິງຈັງ, ມີການດຳເນີນຄະດີ, ເຈົ້າໜ້າທີ່ທາງຕຸລາການ ແລະ ຈາກພາກສ່ວນອື່ນໆຕ້ອງໃຫ້ການຮ່ວມມືໃນການເປີດ ເຜີຍຄວາມຈິງ ແລະ ຈະຕ້ອງໄດ້ນຳຕົວ ຜູ້ກະທຳຜິດມາລົງໂທດໃຫ້ໄດ້. ເພື່ອຈະປະຕິບັດໄດ້ດັ່ງທີ່ວ່ານີ້, ລັດຖະບານ ລາວຕ້ອງຮັບປະກັນໃຫ້ເຈົ້າໜ້າທີ່ສືບສວນສອບສວນໄດ້ມີ “ອຳນາດ ແລະ ຊັບພະຍາກອນທີ່ຈຳເປັນຢ່າງພຽງ ພໍເພື່ອຈະ ນຳໃຊ້ເຂົ້າໃນການສືບສວນສອບສວນໃຫ້ມີປະສິດທິພາບ”

## ຄຳແນະນຳທີ່ສຳຄັນ

ຄະນະກຳມາທິການກົດໝາຍສາກົນເຫັນວ່າບັນດາຄຳແນະນຳທີ່ມີຂ້າງລຸ່ມນີ້ ແລະ ຕາມເອກະສານຊ້ອນທ້າຍ 1 ໄດ້ໃຫ້ແນວທາງແກ່ເຈົ້າໜ້າທີ່ຝ່າຍລາວເພື່ອນຳໄປຈັດຕັ້ງປະຕິບັດຢ່າງເຕັມທີ່ພາຍໃຕ້ພັນທະທີ່ມີໃນກົດໝາຍສາກົນ ໃນການດຳເນີນງານໃຫ້ສອດຄ່ອງ ແລະ ໂປ່ງໃສ, ມີອິດສະລະ, ແລະ ບໍ່ມີການລຳອຽງໃດໆຕໍ່ບັນຫາທີ່ເກີດຂື້ນ.

## ຄໍາແນະນໍາທີ່ສໍາຄັນສໍາລັບປະເທດລາວມີ:

ສ້າງຕາຄ່າຍການປະສານງານກັບຄອບຄົວຢ່າງມີປະສິດທິພາບເພື່ອຮັບປະກັນສິດທີ່ຈະໄດ້ຮັບຂໍ້ມູນຂ່າວສານເປັນປະຈໍາ ຕໍ່ເນື່ອງກ່ຽວກັບ ຄວາມຄືບໜ້າ ແລະ ຜົນຈາກການ ສືບສວນສອບສວນ ແລະ ທັງຈະເປັນການຮັບປະກັນຄວາມມີປະ ສິດທິພາບໃນການ ດໍາເນີນການສືບສວນສອບສວນອີກດ້ວຍ.

ນໍາໃຊ້ຍຸດທະສາດການສືບສວນສອບສວນເພື່ອຮັບປະກັນການວິເຄາະຢ່າງເປັນລະບົບ ແລະ ຈະໄດ້ຂໍ້ມູນທີ່ກ່ຽວຂ້ອງ ທັງໝົດ, ຂໍ້ມູນທີ່ວ່ານີ້ກໍ່ມີພາບບັນທຶກໃນກ້ອງວົງຈອນປິດ, ບັນດາຄວາມຄິດເຫັນ, ການມອບຂໍ້ມູນໃຫ້ຜູ້ທີ່ມີຄວາມຊໍານານ ທີ່ໄດ້ຖືກຮັບຮອງ ແລະ ມີອິດສະຫລະເປັນຜູ້ດໍາເນີນການກວດສອບ.

ຊອກຫາການຊ່ວຍເຫຼືອຈາກອົງການສາກົນຕ່າງໆເພື່ອດໍາເນີນການກວດສອບດ້ານນິຕິວິທະຍາ ແລະ ວິເຄາະບ່ອນ ທີ່ເກີດເຫດທາງອາສະຍາກໍາ, ຍານພາຫະນະ, ຫຼັກຖານທາງວິວະວິທະຍາ, ໂທລະສັບ, ກ້ອງວົງຈອນປິດ, ແລະ ຫຼັກຖານ ດ້ານອື່ນໆ.

ໃຫ້ການຮັບປະກັນການທົບທວນຄືນຂອບເຂດ, ຍຸດທະວິທີ, ແລະ ຜົນທີ່ໄດ້ຈາກການສືບສວນສອບສວນທີ່ຜ່ານມາວ່າ ໄດ້ຮັບການ ດໍາເນີນການຈາກໜ່ວຍງານທີ່ຊໍານານງານ, ມີຄວາມສາມາດ, ແລະ ເປັນອິດສະລະແລ້ວ ຫຼື ບໍ່. ໜ່ວຍງານ ທີ່ກ່ຽວນີ້ແມ່ນຕ້ອງມີສິດໃນການຂໍຂໍ້ມູນ, ສອບຖາມຜູ້ທີ່ກ່ຽວຂ້ອງ, ແລະ ໃຫ້ຄໍາແນະນໍາໄດ້. ເຈົ້າໜ້າທີ່ ແລະ ຜູ້ຊ່ຽວ ຊານທຸກຄົນທີ່ກ່ຽວຂ້ອງໃນ ການດໍາເນີນງານຕ້ອງໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນແກ່ໜ່ວຍງານທີ່ເປັນອິດສະລະເຫຼົ່ານີ້ນີ້ ເພື່ອຈະໄດ້ດໍາເນີນການຕໍ່ໄປ.

### ສະຫຼຸບເຫດການ

ໃນເດືອນຕຸລາປີ 2012, ທ່ານ ສົມບັດ ສົມພອນໄດ້ປະກອບສ່ວນຊ່ວຍໃນການຈັດຕັ້ງກອງປະຊຸມພາກປະຊາສັງຄົມອາຊີ-ເອີຣົບ(AEPF) ແລະ ກໍ່ທັງເປັນປະທານຮ່ວມກັບຄະນະຈັດຕັ້ງແຫ່ງຊາດລາວ, ໃນນັ້ນ ທ່ານ ສົມບັດ ສົມພອນ ໄດ້ມີບົດບາດສໍາຄັນ ເປັນຜູ້ປະສານງານ ແລະ ດໍາເນີນກອງປະຊຸມ. ໃນລະຫວ່າງການດໍາເນີນກອງປະຊຸມນັ້ນ, ກໍ່ໄດ້ມີຜູ້ເຂົ້າຮ່ວມ ຫຼາຍຄົນຕັ້ງຄໍາຖາມກ່ຽວກັບບັນຫາສິດທິມະນຸດໃນ ສປປ ລາວ.



ພາບສະຖານທີ່ຂອງປ້ອມຕໍາຫຼວດໃນວຽງຈັນ

ໃນວັນທີ 15 ທັນວາ 2012, ເວລາປະມານ 17:30 ທ່ານ ສົມບັດ ພ້ອມກັບພັນລະຍາ Ng Shui Meng ໄດ້ເດີນທາງອອກຈາກຫ້ອງການໂດຍນໍາໃຊ້ລົດຄົນລະ ຄັນເພື່ອກັບບ້ານ. ແລະແລ້ວ ທ່ານ ສົມບັດກໍບໍ່ໄດ້ກັບຮອດບ້ານອີກເລີຍ ແລະ ນັ້ນກໍ່ເປັນສາເຫດວ່າ ທ່ານ ສົມບັດ ໄດ້ຖືກເຮັດໃຫ້ຫາຍຕົວໄປ. ໃນວັນທີ 16 ທັນວາ 2012 ຄອບຄົວ ທ່ານ ນາງ Ng Shuimeng ໄດ້ເຂົ້າໄປແຈ້ງຄວາມ ກັບເຈົ້າໜ້າຕໍາຫຼວດນະຄອນ ຫຼວງວ່າສາມີຂອງເພິ່ນໄດ້ຫາຍໄປ.

ໃນວັນທີ 17 ທັນວາ 2012 ທາງຄອບຄົວໄດ້ຂໍເຂົ້າເບິ່ງພາບບັນທຶກຈາກກ້ອງວົງຈອນປິດ ຂອງປກສ ນະຄອນຫຼວງ ເຊິ່ງໄດ້ຂໍກວດເບິ່ງພາບບັນທຶກຈາກກ້ອງວົງຈອນປິດຂອງຕໍາ ຫຼວດທີ່ຢູ່ໃກ້ກັບປ້ອມຕໍາຫຼວດທີ່ຜູ້ເປັນພັນລະຍາທ່ານສົມບັດ ເຫັນສາມີຂອງຕົນເອງຄັ້ງສຸດທ້າຍເມື່ອວັນທີ 15 ທັນວາ 2012. ຄອບຄົວທ່ານນາງ Ng Shui Meng ກໍໄດ້ຮັບ ອານຸຍາດບັນທຶກໃຫ້ບັນທຶກພາບທີ່ເຫັນໃນຈໍຄອມພິວເຕີ້ດ້ວຍກ້ອງຖ່າຍຮູບ.


ພາບປ້ອມຕໍາຫຼວດບ່ອນທີ່ ທ່ານ ສົມບັດໄດ້ຖືກເຫັນເປັນຄັ້ງສຸດທ້າຍ

ກ້ອງວົງຈອນປິດໄດ້ສະແດງໃຫ້ເຫັນພາບຕອນທີ່ ທ່ານ ສົມບັດ ສົມພອນ ແລະ ລົດຂອງລາວຖືກຕຳຫຼວດເອີ້ນໃຫ້ຈອດຢູ່ໜ້າປ້ອມຕຳຫຼວດ ຫຼັກ 3, ຖະໜົນທ່າເດື່ອ ໃນເວລາປະມານ 18:00. ພາບບັນທຶກຍັງໄດ້ ສະແດງໃຫ້ເຫັນຕອນທີ່ທ່ານສົມບັດ ໄດ້ຍ່າງລົງຈາກ ລົດຂອງລາວ ແລ້ວຍ່າງໄປຫາຕຳຫຼວດທີ່ປະຈຳການ ໃນປ້ອມນັ້ນ.

ຫຼັງຈາກນັ້ນກໍ່ມີຄົນຂັບຂີ່ລົດຈັກມາຈອດທາງດ້ານໜ້າຂອງລົດ ທ່ານ ສົມບັດ ແລ້ວເຂົ້າໄປໃນປ້ອມຕຳຫຼວດ. ຕໍ່ມາຄົນທີ່ມາກັບລົດຈັກນັ້ນກໍ່ໄດ້ຂັບລົດຂອງທ່ານສົມບັດອອກໄປ. ພໍບໍ່ດົນກໍ່ມີລົດກະບະຄັນໜຶ່ງຂັບມາຮອດປ້ອມຕຳຫຼວດ ແລ້ວນຳເອົາທ່ານ ສົມບັດຂຶ້ນລົດກະບະແລ້ວຂັບລົດອອກໄປ ພ້ອມກັບຜູ້ຊາຍສອງຄົນນັ່ງຊ້ອນລົດຈັກກັນຕາມຫຼັງໄປນຳ.

## ຂອບເຂດທາງກົດໝາຍ: ພັນທະຂອງ ສປປ ລາວ ໃນການສືບສວນສອບສວນ

ຄຳຖະແຫຼງການທັງ 4 ຄັ້ງຈາກລັດຖະບານຂອງ ສປປ ລາວ ແລະ ບົດລາຍງານ 3 ສະບັບຂອງຕຳຫຼວດໄດ້ອອກມາຖະ ແຫຼງວ່າລັດຖະບານ ສປປ ລາວ ບໍ່ໄດ້ມີສ່ວນຮູ້ເຫັນເປັນໃຈກັບເຫດການດັ່ງກ່າວແຕ່ຢ່າງໃດ. ນອກນີ້ ທາງການລາວຍັງ ມີຄຳເຫັນວ່າ ບັນຫາຂອງທ່ານສົມບັດ ອາດເກີດຂຶ້ນຈາກ "ຂໍ້ຂັດແຍ່ງສ່ວນຕົວ ຫຼື ຂໍ້ຂັດແຍ່ງທາງທຸລະກິດ" ນອກຈາກນີ້ທາງການລາວຍັງປະຕິເສດວ່າ ພາບໃນກ້ອງວົງຈອນປິດບໍ່ແຈ້ງ ບໍ່ສາມາດບອກໄດ້ວ່າໃຜເປັນໃຜ ຫຼື ລົດຄັນໃດທີ່ປາກົດໃນພາບ ນອກຈາກນີ້ ເຈົ້າໜ້າທີ່ຕຳຫຼວດທີ່ຢູ່ປ້ອມດັ່ງກ່າວໃນມື້ນັ້ນກໍລາຍງານວ່າບໍ່ປາກົດເຫັນເຫດການທີ່ຜິດປົກກະຕິໃດໆ ໃນມື້ນັ້ນແລະຈຸດປ້ອມຕຳຫຼວດນັ້ນທີ່ສົມບັດ ຖືກເອົາຕົວໄປ.

ເຖິງແມ່ນວ່າທາງການລາວມີທ່າທີດັ່ງກ່າວກໍ່ຕາມ, ຖ້າອີງໃສ່ຂໍ້ມູນຫຼັກຖານທີ່ມີແລ້ວ ທາງຄະນະກຳມາທິການກົດໝາຍ ສາກົນກໍ່ເຫັນວ່າການຫາຍຕົວໄປຂອງທ່ານ ສົມບັດ ມີມູນເຫດທີ່ກ່ຽວຂ້ອງກັບການຖືກບັງຄັບໃຫ້ຫາຍສາບສູນ ໂດຍອີງ ຕາມມາດຕາ 2 ຂອງສົນທິສັນຍາສາກົນວ່າດ້ວຍການປົກປ້ອງບຸກຄົນຈາກການຖືກບັງຄັບໃຫ້ຫາຍສາບສູນ(ICPPED):

## ມາດຕາ 2 ຂອງສົນທິສັນຍາ (ICPPED):

ສຳລັບວັດຖຸປະສົງຂອງສົນທິສັນຍາສະບັບນີ້, "ການບັງຄັບໃຫ້ຫາຍສາບສູນ" ໄດ້ຖືກພິຈາລະນາວ່າກ່ຽວຂ້ອງກັບການຈັບ ກຸມ, ການກັກຂັງ, ການລັກພາຕົວ, ຫຼື ທຸກຮູບແບບອື່ນໆທີ່ກ່ຽວຂ້ອງກັບການຕັດອິດສະລະພາບທີ່ກະທຳໂດຍ ຕົວແທນຂອງ ລັດ ຫຼື ໂດຍບຸກຄົນ ຫຼື ກຸ່ມໃດໜຶ່ງທີ່ໄດ້ຮັບການສະໜັບສະໜູນ, ອະນຸຍາດ ຫຼື ຍິນຍອມຈາກລັດ, ການກະທຳຍັງລວມໄປ ເຖິງການປະຕິເສດຮັບຮູ້ການຕັດເປັນອິດສະຫຼະພາບ ຫຼື ມີການປົດບັງບໍ່ໃຫ້ຂໍ້ມູນ ທີ່ມີການພົວພັນເຖິງສະຕາກຳ ຫຼື ເງື່ອນ ງຳຂອງບຸກຄົນທີ່ຫາຍຕົວໄປ, ຫຼື ບໍ່ໃຫ້ຂໍ້ມູນສະຖານທີ່ທີ່ບຸກຄົນນັ້ນຕົກຢູ່ນອກເຂດອຳນາດທາງກົດໝາຍທີ່ຈະປົກປ້ອງໄດ້.

ການບັງຄັບໃຫ້ຫາຍສາບສູນໄດ້ຖືກຮັບຮູ້ວ່າເປັນອາຊະຍາກຳພາຍໃຕ້ກົດໝາຍສາກົນທີ່ຂຽນໃນກົດໝາຍ ແລະ ຖືເປັນ ຄວາມຜິດທາງອາຊະຍາກຳໃນຕົວມັນເອງ. ການບັງຄັບໃຫ້ຫາຍສາບສູນຍັງໝາຍເຖິງບັນຫາການລະເມີດສິດທິມະນຸດ ທີ່ຮ້າຍແຮງຫຼາຍຢ່າງ. ການລະເມີດສິດທີ່ທີ່ວ່ານີ້ລວມມີການລະເມີດສິດໃນເສລີພາບ ແລະ ລະເມີດສິດທີ່ຫ້າມບໍ່ໃຫ້ມີ ການກັກຂັງແບບບໍ່ມີເຫດຜົນ, ການທໍລະ ມານ ແລະ ຮູບແບບທາລຸນຕ່າງໆ, ການລົງໂທດທີ່ໄຮ້ມະນຸດສະທຳ ແລະ ເຮັດ ໃຫ້ເຊື່ອມເສຍກຽດຕິຍົດ. ການລະເມີດສິດທີ່ຈະຮັບຮູ້ບຸກຄົນຕາມກົດໝາຍ; ແລະ ໃນບາງກໍລະນີມັນຍັງກ່ຽວຂ້ອງກັບ ການລະເມີດສິດທີ່ຈະມີຊີວິດຢູ່ລອດອີກດ້ວຍ.

ໃນຖານະທີ່ເປັນລັດພາຄີຂອງສົນທິສັນຍາສາກົນວ່າດ້ວຍສິດຂອງພົນລະເຮືອນ ແລະ ສິດທິທາງການເມືອງ (ICCPR), ເປັນລັດພາຄີຂອງສົນທິສັນຍາວ່າດ້ວຍການຕ້ານການທໍລະມານ ແລະ ການກະທຳອື່ນໆ, ແລະ ທັງເປັນລັດ ພາຄີຂອງ ຂອງສົນທິສັນຍາວ່າດ້ວຍການຕ້ານການລົງໂທດ ແລະ ການກະທຳທີ່ໄຮ້ມະນຸດສະທຳ ແລະ ເຮັດໃຫ້ເສຍ ກຽດສັກສີ (CAT), ລັດຖະບານຂອງ ສປປ ລາວ ມີໜ້າທີ່ ແລະ ພັນທະພາຍໃຕ້ກົດໝາຍສາກົນທີ່ວ່ານີ້ທີ່ຈະຕ້ອງດຳເນີນການສືບ ສວນສອບສວນໃນຄະດີທີ່ເກີດຂຶ້ນ ຫຼື ດຳເນີນການໃນກໍລະນີທີ່ສົງໃສວ່າມີການລະເມີດສິດທີ່ກຳນົດໃນສົນທິສັນຍາເຫຼົ່ານັ້ນ ເກີດຂຶ້ນແລ້ວ. ການລະເມີດເຫລົ່ານັ້ນແມ່ນລວມໄປເຖິງກໍລະນີການຖືກບັງຄັບໃຫ້ຫາຍສາບສູນ, ການທໍລະມານ ຫຼື ການກະທຳທີ່ບໍ່ເປັນທຳເຊັ່ນ: ການດຳເນີນການໄຕ່ສວນທີ່ບໍ່ມີຫຼັກການ ແລະ ນອກລະບົບ; ຫຼື ມີການກັກຂັງໂດຍບໍ່ມີສາຍ ເຫດ. ພາຍໃຕ້ຂໍ້ກຳດົດຂອງສົນທິສັນຍາເຫຼົ່ານີ້ ລັດຖະບານສປປ ລາວ ແມ່ນມີພັນທະໜ້າທີ່ຈະດຳເນີນການສືບສວນ ສອບສວນ ໃນບັນຫາທີ່ເກີດໃຫ້ທັນການ, ຕໍ່ເນື່ອງ ແລະ ດຳເນີນການໄປໂດຍມີປະສິດທິພາບ, ອິດສະລະ ແລະ ເປັນທາງ.

ພັນທະໜ້າທີ່ທີ່ກ່າວມານີ້ແມ່ນໄດ້ກຳນົດໃນມາດຕາ 3, 5, 12 ແລະ 24 ຂອງສົນທິສັນຍາ ICPPED. ລັດຖະບານ ລາວໃນຖານະເປັນຜູ້ລົງນາມ, ແຕ່ຍັງບໍ່ທັນໄດ້ໃຫ້ສັດຕະຍາບັນໃນສົນທິສັນຍານີ້ເທື່ອ, ເຈົ້າໜ້າທີ່ຂອງລາວ ແມ່ນຍັງ ຢູ່ພາຍໃຕ້ພັນທະທີ່ຈະບໍ່ດຳເນີນການໃດໆທີ່ຂັດກັບວັດຖຸປະສົງ ແລະ ເປົ້າໝາຍຂອງສົນທິສັນຍາມີຄື: ຕ້ອງໃຫ້ການປ້ອງ ກັນ, ດຳເນີນຄະດີ, ແລະ ນຳຜູ້ກະທຳຜິດທີ່ກ່ຽວຂ້ອງກັບການບັງຄັບໃຫ້ຫາຍສາບສູບມາລົງໂທດ ພ້ອມທັງຕ້ອງຮັບປະກັນ ວ່າຈະມີການດຳເນີນ ການແກ້ໄຂແບບມີປະສິດທິຜົນ ແລະ ປຽວຢາຜູ້ຖືກເຄາະຮ້າຍກຈາກການບັງຄັບໃຫ້ຫາຍສາບສູບ:

## ມາດຕາ 3 ຂອງສົນທິສັນຍາ ICPPED

ທຸກລັດພາຄີຂອງສົນທິສັນຍາຈະຕ້ອງນຳໃຊ້ທຸກມາດຕະການທີ່ເໝາະສົມເພື່ອດຳເນີນການສືບສວນສອບສວນ ແລະ ນຳຕົວຜູ້ກະທຳຜິດມາລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ວ່າດ້ວຍການກະທຳທີ່ເກີດຂຶ້ນຈາກບຸກຄົນ ຫຼື ກຸ່ມຄົນ ທີ່ກະທຳໄປນອກເໜືອຈາກຄຳສັ່ງ, ໃຫ້ການສະໜັບສະໜູນ ຫຼື ຮູ້ເຫັນເປັນໃຈນຳລັດ.

ໂດຍອີງຕາມວັດຖຸປະສົງຂອງການສືບສວນສອບສວນຕໍ່ກັບບັນຫາການກະທຳການທໍລະມານ, ວັກທີ 77 ຂອງນານຸ ສັນຍາ ອິສຕັນບູ Istanbul ໃຫ້ທັດສະນະວ່າ:

## A. ວັດຖຸປະສົງໃນການສືບສວນສອບສວນຕໍ່ກັບບັນຫາການທໍລະມານ

77. ວັດຖຸປະສົງໂດຍລວມຂອງການສືບສວນສອບສວນກໍ່ແມ່ນເພື່ອຊອກຫາຄວາມຈິງທີ່ເກີດຂຶ້ນກ່ຽວກັບບັນຫາການກະທຳການທໍລະມານ, ເພື່ອເປັນການລະບຸຕົວຜູ້ທີ່ມີສ່ວນຮັບຜິດຊອບຕໍ່ເຫດການດັ່ງກ່າວ ແລະ ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ການດຳເນີນຄະດີ, ຫຼື ເພື່ອນຳໃຊ້ເຂົ້າໃນຂັ້ນຕອນຕ່າງໆ ເພື່ອເປັນການຊ່ວຍເຫຼືອຜູ້ ເຄາະຮ້າຍ. ສິ່ງທີ່ກ່າວມານີ້ຍັງອາດຈະມີສ່ວນພົວພັນກັບການສືບສວນສອບສວນ ໃນຮູບແບບອື່ນຕໍ່ບັນຫາການຖືກກະທຳການທໍລະມານ. ເພື່ອເຮັດໃຫ້ບັນລຸວັດຖຸປະສົງດັ່ງກ່າວ ຜູ້ທີ່ດຳເນີນການສືບສວນສອບສວນຈະຕ້ອງ (ຢ່າງໜ້ອຍ) ຊອກຫາຂໍ້ມູນຈາກຜູ້ເຄາະຮ້າຍຈາກການຖືກກະທຳການທໍລະມານ; ຄົ້ນຫາ ແລະ ເກັບຮັກສາຂໍ້ມູນ ທີ່ລວມທັງບັນດາຂໍ້ມູນທາງການແພດ, ໃຫ້ການຊ່ວຍເຫຼືອແກ່ການດຳເນີນຄະດີເພື່ອຊອກຫາຜູ້ກະ ທຳຜິດມາ ຮັບຜິດຊອບ, ຊອກຫາພະຍານປາກສຳຄັນ ແລະ ເກັບກຳຂໍ້ມູນຫຼັກຖານນຳຜູ້ທີ່ມີສ່ວນກ່ຽງຂ້ອງກັບການກະທຳການທໍລະມານ. ນອກນັ້ນຜູ້ທີ່ດຳເນີນການສືບສວນສອບສວນຕ້ອງຮູ້ວິທີການວິເຄາະບັນຫາການກະທຳການທໍລະມານວ່າເກີດຂຶ້ນແນວໃດ, ເກີດເມື່ອໃດ, ແລະ ເກີດຢູ່ບ່ອນໃດ, ວິທີກະທຳໃນການທໍລະມານແມ່ນເຮັດແນວໃດ.

ການສືບສວນສອບສວນກ່ຽວກັບບັນຫາຖືກບັງຄັບໃຫ້ຫາຍສາບສູນ ແລະ ການລະເມີດສິດທິຕ່າງໆ ບໍ່ຄວນ ເຈາະຈົງແຕ່ຜູ້ທີ່ກະທຳຜິດໂດຍກົງ. ອີງຕາມຄະນະກຳມະທິການຕ້ານການກະທຳການທໍລະມານໄດ້ໃຫ້ຄຳອະທິບາຍ ວ່າການສືບ ສວນສອບສວນຄວນໃຫ້ຄວາມສຳຄັນກັບຜູ້ທີ່ມີສ່ວນກ່ຽວອື່ນໆນຳ ດັ່ງທີ່ໄດ້ລະບຸໄວ້ວ່າ “*ຜູ້ນຳຂັ້ນສູງອາດມີ ສ່ວນກ່ຽວຂ້ອງໃນການສະໜັບສະໜຸນ ຫຼື ຢູ່ເບື້ອງຫຼັງການກະທຳຜິດນັ້ນໂດຍກົງ ຫຼື ສັ່ງໃຫ້ກະທຳ ຫຼື ເມີນເສີຍຕໍ່ສິ່ງທີ່ ເກີດຂຶ້ນ, ການສືບສວນສອບສວນຕ້ອງ ຖືກດຳເນີນການໂດຍຜູ້ທີ່ຊ່ຽວຊານ ຫຼື ພະນັກງານຕຸລາການທີ່ມີອິດສະລະ, ເປັນກາງ ແລະ ມີຄວາມສາມາດ*”

ອີງຕາມສົນທິສັນຍາ ICPPED, ລັດພາຄີຕ້ອງນຳໃຊ້ທຸກມາດຕະການທີ່ຈຳເປັນເພື່ອນຳຕົວຜູ້ກະທຳຜິດລະດັບສູງມາຮັບຜິດ ຊອບຕາມກົດໝາຍ. ນອກນີ້ ສົນທິສັນຍາຍັງບໍ່ອະນຸຍາດໃຫ້ໜ່ວຍງານໃດໆຈາກພາກລັດທີ່ກ່ຽວຂ້ອງເຂົ້າມາແຊກແຊງການ ດຳເນີນງານໃນບັນຫາການຖືກບັງຄັບໃຫ້ຫາຍສາບສູບຂອງບຸກຄົນ, ການທໍລະມານ, ແລະ ການກະທຳອື່ນໆທີ່ໄຮ້ມະນຸດ ສະທຳ.

## ຂໍ້ສົມມຸດຕິຖານເພື່ອວຽກງານການສືບສວນສອບສວນ

ການຕັ້ງຂໍ້ສົມມຸດຕິຖານຂຶ້ນມານີ້ກໍ່ແມ່ນອີງຕາມການປະເມີນດ້ານຂໍ້ມູນຂ່າວສານທີ່ມີຄື:

ມີພະນັກງານຂອງລັດ ຫຼື ຜູ້ທີ່ມີອຳນາດໄດ້ໃຫ້ການສະໜັບສະໜູນ ຫຼື ເມີນເສີຍຕໍ່ທຳການກັກຂັງ ຫຼື ການຕັດອິດສະລະພາບຂອງທ່ານສົມບັດ ສົມພອນ ແລະ ທາງການ ສປປ ລາວ ກໍ່ໃຫ້ການປະຕິເສດ ບໍ່ຮັບຮູ້ ຫຼື ໄດ້ປິດບັງກ່ຽວກັບຊະຕາກຳ ຫຼື ບ່ອນຢູ່ ພ້ອມທັງບໍ່ໃຫ້ການປົກປ້ອງທ່ານສົມບັດຕາມກົດໝາຍທີ່ມີຢູ່.

## ວັດຖຸປະສົງຂອງການສືບສວນສອບສວນ

ຖ້າເອົາຂໍ້ສົມມຸດຕິຖານຂ້າງເທິງນີ້ໄປດໍາເນີນການມັນກໍຈະຊ່ວຍໃຫ້ສາມາດສ້າງຄໍາຖາມໄດ້ຫຼາຍຢ່າງເພື່ອນໍາໄປດໍາເນີນການສືບສວນສອບສວນຕໍ່ໄປ. ຜູ້ທີ່ຈະຕອບຄໍາຖາມເຫຼົ່ານັ້ນໄດ້ດີໃນການສືບສວນສອບສວນກໍ່ແມ່ນເຈົ້າໜ້າທີ່ຂອງ ສປປ ລາວ ທີ່ຈະເປັນຜູ້ໄຂປິດສະໜາໃຫ້ວ່າ:

- ໃຜເປັນຄົນດໍາເນີນການລົງມືລັກພາຕົວທ່ານ ສົມບັດ ສົມພອນ ໃນວັນທີ 15 ທັນວາ 2012?
- ໃຜເປັນຜູ້ອອກຄໍາສັ່ງໃຫ້ລັກພາຕົວ?
- ໃຜເປັນຄົນວາງແຜນ?
- ມີໃຜແດ່ຮັບຮູ້ວ່າຈະມີການລັກພາຕົວທ່ານ ສົມບັດ ສົມພອນ ຫຼື ຮູ້ລາຍລະອຽດຂອງການກະທໍານັ້ນ?
- ເປັນຫຍັງທ່ານ ສົມບັດ ສົມພອນຈຶ່ງຕົກເປັນເປົ້າໝາຍຂອງການລັກພາຕົວ?
- ໃຜເປັນຜູ້ສືບຕໍ່ດໍາເນີນການຄວບຄຸມການຫາຍຕົວໄປຂອງທ່ານ ສົມບັດ ສົມພອນ?
- ທ່ານ ສົມບັດ ສົມພອນໃນປະຈຸບັນແມ່ນຢູ່ໃສແທ້?

**ຍຸດທະສາດດໍາເນີນການສືບສວນສອບສວນຄວນຈະ:**

- ດໍາເນີນການສືບສວນສອບສວນຢ່າງມີລະບົບ ແລະ ໂປ່ງໃສພ້ອມທັງມີການສອບຖາມຢ່າງຖືກຕ້ອງ ແລະ ກົງປະເດັນ ທີ່ກ່ຽວຂ້ອງກັບການຫາຍຕົວໄປຂອງທ່ານ ສົມບັດ ສົມພອນ ມັນກໍ່ສາມາດຊ່ວຍໃຫ້ການດໍາເນີນງານຄົ້ນຫາຄວາມຈິງ ເປັນໄປຢ່າງຖືກຕ້ອງ ແລະ ກໍສາມາດຄົ້ນຫາ ແລະ ນໍາຕົວຜູ້ທີ່ກ່ຽວຂ້ອງມາຮັບຜິດຊອບຕາມກົດໝາຍໄດ້.
- ອໍານວຍຄວາມສະດວກໃຫ້ແກ່ການດໍາເນີນງານທີ່ອອກແບບມາເພື່ອຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍ
- ຮັບປະກັນໃຫ້ຜູ້ທີ່ເຮັດໜ້າທີ່ການສືບສວນສອບສວນມີອິດສະລະໃນການເຮັດວຽກໂດຍບໍ່ໃຫ້ມີການແຊກແຊງຈາກຜູ້ທີ່ ຕ້ອງສົງໄສ ແລະຈາກສໍານັກງານຂອງຜູ້ກ່ຽວ, ຜູ້ສືບສວນສອບສວນຕ້ອງມີຄວາມຊ່ຽວຊານ ແລະ ເປັນກາງ-ສາ ມາດເຂົ້າຫາທຸກຂໍ້ມູນ ແລະ ມີສິດທີ່ຈະສືບສວນສອບສວນຮ່ວມກັບຜູ້ຊ່ຽວຊານທາງການແພດ ແລະ ຊ່ຽວຊານອື່ນໆ.
- ຮັບປະກັນ ການດໍາເນີນການສືບສວນສອບສວນໃຫ້ດໍາເນີນໄປຕາມມາດຕະຖານທາງວິຊາຊີບໃຫ້ໄດ້ດີທີ່ສຸດ, ແລະ ສາ ມາດເປີດເຜີຍຜົນທີ່ໄດ້ຮັບນັ້ນໃຫ້ສາທາລະນະຮັບຮູ້ນໍາ.

**ເຖິງແມ່ນວ່າເປົ້າໝາຍຫຼັກຂອງຍຸດທະສາດການສືບສວນສອບສວນແມ່ນເພື່ອຮວບຮວມ ແລະ ຄົ້ນຫາຂໍ້ມູນ, ແຕ່ກໍ່ຍັງ ມີອີກສອງຢ່າງທີ່ຕ້ອງໄດ້ປະຕິບັດຄື:**

- ໃຫ້ການຊ່ວຍເຫຼືອໃນລະດັບທີ່ເໝາະສົມແກ່ຄອບຄົວຜູ້ຖືກເຄາະຮ້າຍໃຫ້ໄດ້ຮັບຮູ້ເຖິງຄວາມເປັນຈິງວ່າທ່ານ ສົມບັດ ສົມພອນ ໄດ້ຕົກເປັນບຸກຄົນທີ່ຫາຍສາບສູນແລ້ວ. ການເປີດກວ້າງ, ການສ້າງສາຍສໍາພັນຢ່າງໂປ່ງໃສ ແລະ ລະອຽດ ອ່ອນບົນພື້ນຖານຂອງຄວາມໄວ້ວາງໃຈເຊິ່ງກັນແລະກັນລະຫວ່າງຄອບຄົວຜູ້ທີ່ຖືກເຄາະຮ້າຍ ແລະ ຜູ້ສືບສວນສອບ ສວນແມ່ນສາມາດສ້າງປະໂຫຍດໃຫ້ແກ່ການດໍາເນີນງານໄດ້ໂດຍສະເພາະແມ່ນການແລກປ່ຽນຂໍ້ມູນລະຫວ່າງກັນ ພ້ອມທັງເປັນການຮັບປະກັນການຮ່ວມມືຂອງຄອບຄົວ ແລະ ຂອງຊຸມຊົນໃຫ້ບັນລຸເປົ້າໝາຍຂອງການດໍາເນີນງານ ໃຫ້ໄດ້ຮັບຜົນສໍາເລັດຕາມທີ່ວາງໄວ້.
- ຕອບສະໜອງການຮຽກຮ້ອງຂໍຂໍ້ມູນກ່ຽວກັບບັນຫາຂອງທ່ານສົມບັດສົມພອນຢ່າງຖືກຕ້ອງໃຫ້ແກ່ຜູ້ທີ່ສອບຖາມຢູ່ ພາຍໃນ ແລະ ສາກົນ

ເຈົ້າໜ້າທີ່ຕໍາຫຼວດຜູ້ຮັບຜິດຊອບສືບສວນສອບສວນຄວນຈະບັນທຶກທຸກຍຸດທະສາດທີ່ນໍາໃຊ້ໃນການສືບສວນສອບສວນ ຂອງຕົນເອົາໄວ້. ທຸກ ການຈັດຕັ້ງປະຕິບັດທີ່ສໍາຄັນຕ້ອງໄດ້ຮັບການບັນທຶກໃສ່ແຟ້ມເອກະສານຂອງຖານຂໍ້ມູນເຊິ່ງ ລວມມີບັນດາຍຸດ ທະສາດຫຼັກ ແລະ ຍຸດທະສາດສໍາຮອງທີ່ມີທັງເລື່ອງການຈັດແບ່ງງົບປະມານ ແລະ ການຈັດສັນ ບຸກຄະລາກອນ ເຂົ້າໃສ່ການສືບສວນສອບສວນ.

ຖານຂໍ້ມູນຈະເປັນປະຫວັດສໍາຄັນທີ່ທີມເຈົ້າໜ້າທີ່ຕໍາຫຼວດສືບສວນສອບສວນຈະໄດ້ນໍາໃຊ້ໃນການຕອບຄໍາຖາມກ່ຽວ ກັບເລື່ອງທີ່ຕົນໄດ້ດໍາເນີນການຜ່ານມາໃຫ້ແກ່ທີ່ກອງປະຊຸມສານ ແລະ ຄອບຄົວຜູ້ຖືກເຄາະຮ້າຍ.

## ການຕິດຕໍ່ປະສານງານກັບຄອບຄົວ

ສິ່ງໜຶ່ງທີ່ສຳຄັນທີ່ສຸດທີ່ຄວນໄດ້ຮັບການພິຈາລະນາໃນການສືບສວນສອບສວນກໍ່ຄືການໃຫ້ຂໍ້ມູນ ແລະ ໃຫ້ການສະໜັບ ສະໜູນແກ່ຄອບຄົວຂອງທ່ານສົມບັດສົມພອນໂດຍສະເພາະແມ່ນຜູ້ທີ່ເປັນພັນລະຍາຄື ທ່ານນາງ Ng Shui Meng

ທ່ານ ນາງ Ng Shui Meng ແມ່ນມີສິດທີ່ຈະໄດ້ຮັບຂໍ້ມູນກ່ຽວກັບສາມີຂອງຜູ່ກ່ຽວ, ມີສິດທີ່ຈະໄດ້ຮັບຂໍ້ມູນໃຫ່ມໆ ກ່ຽວກັບຄວາມຄືບໜ້າ ແລະ ສະພາບຂອງການດຳເນີນງານ. ດັ່ງນັ້ນ ທ່ານນາງ Ng Shui Meng ຈຶ່ງຖືເປັນ ຜູ້ມີສ່ວນຮ່ວມສຳຄັນທີ່ຈະເຮັດໃຫ້ການສືບສວນສອບສວນຈະໄດ້ຮັບຜົນສຳເລັດຕາມເປົ້າໝາຍ.

**ວັດຖຸປະສົງຫຼັກຂອງການຕິດຕໍ່ປະສານງານກັບຄອບຄົວກໍ່ແມ່ນ:**

- ເພື່ອວິເຄາະຫາຄວາມຈຳເປັນ, ຄວາມກັງວົນ, ແລະ ຄວາມຄາດຫວັງຈາກຄອບຄົວ ພ້ອມທັງສຶກສາຫາມາດຕະການທີ່ແທດເໝາະ ແລະ ຈຳເປັນພາຍໃຕ້ການເຄົາລົບ ແລະ ແລະປົກປ້ອງສິດທິມະນຸດຂອງຄອບຄົວ.
- ເພື່ອຮັບປະກັນການເຄົາລົບສິດທິຂອງຄອບຄົວທີ່ຈະໄດ້ຮັບຂໍ້ມູນ ທີ່ຈຳເປັນກ່ຽວຂ້ອງກັບການສືບສວນ ດ້ວຍທ່າທີທີ່ມີການຮັບປະກັນວ່າການສືບສວນສອບສວນຈະມີປະສິດທິຜົນ
- ເພື່ອຊ່ວຍໃນການດຳເນີນການສືບສວນສອບສວນດ້ວຍການ ເກັບຮວບລວມຂໍ້ມູນ ແລະ ຫຼັກຖານຈາກຄອບຄົວໂດຍໃຫ້ການເຄົາລົບສິດທິຄວາມເປັນສ່ວນຕົວ ແລະ ຊີວິດຂອງຄອບຄົວ.
- ເພື່ອຮັບປະກັນບໍ່ໃຫ້ມີການຂົ່ມຂູ່ ຫຼື ໄພຮຸກຮານໃດໆ ຕໍ່ຄອບຄົວດ້ວຍການປະຕິບັດໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ຄວາມປາດຖະໜາຂອງຄອບຄົວ



ທ່ານ ສົມບັດ ສົມພອນ ແລະ Ng Shui Meng

ສົນທິສັນຍາສາກົນວ່າດ້ວຍການປ້ອງກັນບຸກຄົນຈາກການຖືກບັງຄັບໃຫ້ຫາຍສາບສູນ (ICPPED) ພິຈາລະ ນາໃຫ້ທ່ານນາງ Ng Shui Meng ເປັນຜູ້ເຄາະຮ້າຍ ແລະ ຜູ້ກ່ຽວໄດ້ຮັບສິດທິໃນຖານະເປັນຜູ້ເຄາະຮ້າຍດັ່ງນີ້:

## ມາດຕາ 24

1. ສຳລັບຈຸດປະສົງຂອງສົນທິສັນຍານີ້ “ຜູ້ເຄາະຮ້າຍ” ໝາຍເຖິງບຸກຄົນທີ່ຫາຍສາບສູນ ແລະ ບຸກຄົນໃດກໍຕາມທີ່ໄດ້ຮັບຄວາມເດືອດຮ້ອນຈາກຜົນກະທົບຂອງການບັງຄັບໃຫ້ຫາຍສາບສູນ.
2. ຜູ້ເຄາະຮ້າຍແຕ່ລະຄົນມີສິດທີ່ຈະໄດ້ຮູ້ຄວາມເປັນຈິງກ່ຽວກັບສະພາບຂອງການຫາຍຕົວໄປ, ຄວາມຄືບໜ້າ ແລະ ຜົນຈາກ ການສືບສວນສອບສວນ. ທຸກລັດພາຄີຂອງສົນທິສັນຍາຕ້ອງນຳໃຊ້ທຸກມາດຕະການທີ່ເໝາະສົມເພື່ອແກ້ໄຂບັນຫາທີ່ກ່າວມາຂ້າງ ເທິງນີ້.

## ມາດຕາ 12

1. ລັດພາຄີທຸກລັດຕ້ອງໃຫ້ຫຼັກປະກັນແກ່ຜູ້ທີ່ສາມາດໃຫ້ຂໍ້ມູນວ່າຈະມີຄົນຖືກບັງຄັບໃຫ້ຫາຍສາບສູນໄດ້ມີສິດທີ່ຈະນຳເລື່ອງໄປ ລາຍງານໃຫ້ເຈົ້າໜ້າທີ່ທີ່ຮັບຜິດຊອບໄດ້ເພື່ອຈະໄດ້ດຳເນີນການກວດສອບທັນທີ. ໃນກໍລະນີທີ່ຈຳເປັນກໍ່ແມ່ນຕ້ອງໄດ້ດຳ ເນີນການສືບສວນສອບສວນໃຫ້ໄວທີ່ສຸດດ້ວຍຄວາມເປັນກາງ ແລະ ສະໝໍ່າສະເໝີຕໍ່ເນື່ອງ. ນຳໃຊ້ມາດຕະການທີ່ເໝາະສົມເພື່ອຮັບ ປະກັນໃຫ້ການປົກປ້ອງຜູ້ລາຍງານຂໍ້ມູນ, ພະຍານ, ຍາດທີ່ພີ່ນ້ອງຂອງຜູ້ທີ່ຫາຍສາບສູນ, ຜູ້ທີ່ເປັນຕົວແທນ, ແລະ ຜູ້ທີ່ມີສ່ວນກ່ຽວພັນກັບການສືບສວນສອບສວນບໍ່ໃຫ້ໄດ້ຮັບການຖືກຂົ່ມຂູ່, ຫຼື ຕົກຢູ່ໃນໄພອັນຕະລາຍໃດໆຈາກການທີ່ ຜູ້ກ່ຽວໃຫ້ຂໍ້ມູນແກ່ເຈົ້າໜ້າທີ່.

## ມາດຕາ 18

1. ອີງຕາມມາດຕາ 19 ແລະ 20, ແຕ່ລະລັດພາຄີຕ້ອງຮັບປະກັນໃຫ້ການປົກປ້ອງທາງກົດໝາຍແກ່ຜູ້ທີ່ກ່ຽວ ຂ້ອງຄື: ຍາດພີ່ນ້ອງຂອງຜູ່ທີ່ຖືກສູນເສຍອິດສະລະພາບ, ຕົວແທນ ຫຼື ທະນາຍ, ໃຫ້ມີສິດໄດ້ເຂົ້າເຖິງຂໍ້ມູນຕໍ່ໄປນີ້:

    (a) ເຈົ້າໜ້າທີ່ຜູ້ທີ່ເປັນຄົນອອກຄໍາສັ່ງຕັດອິດສະລະພາບ;

    (b) ວັນເດືອນປີ, ເວລາ, ສະຖານທີ່ບ່ອນທີ່ເກີດເຫດການບຸກຄົນສູນເສຍອິດສະລະພາບ ແລະ ສະຖານທີ່ບ່ອນບຸກຄົນຖືກກັກຂັງ;

    (c) ເຈົ້າໜ້າທີ່ຜູ້ທີ່ມີສ່ວນຮ່ວມຮັບຜິດຊອບໃນການອອກຄໍາສັ່ງຕັດອິດສະລະພາບ;

    (d) ສະຖານທີ່ບ່ອນທີ່ເກີດເຫດລວມທັງການເຄື່ອນຍ້າຍຜູ້ຖືກເຄາະຮ້າຍໄປຍັງສະຖານທີ່ອື່ນ, ຈຸດໝາຍປາຍທາງ ແລະ ເຈົ້າໜ້າທີ່ທີ່ມີສ່ວນຮັບພິຊອບໃນການເຄື່ອນຍ້າຍ;

    (e) ວັນເດືອນປີ, ເວລາ, ແລະ ສະຖານທີ່ທີ່ໄດ້ຮັບການປ່ອຍຕົວ;

    (f) ສະພາບທາງດ້ານສຸຂະພາບຂອງຜູ່ທີ່ສູນເສຍອິດສະລະພາບ;

    (g) ສະພາບ ແລະ ສາເຫດຂອງການເສຍຊີວິດພ້ອມທັງບ່ອນເກັບມ້ຽນຊາກສົບ, ໃນກໍລະນີທີ່ຜູ້ສູນເສຍອິດສະລະພາບໄດ້ເສຍຊີວິດລົງໃນລະຫວ່າງໄລຍະເວລາທີ່ຖືກຕັດອິດສະຫລະພາບ

2. ໃນກໍລະນີທີ່ຈໍາເປັນແມ່ນໃຫ້ນໍາໃຊ້ມາດຕະການທີ່ເໝາະສົມເພື່ອທໍາການປົກປ້ອງບຸກຄົນທີ່ກ່ຽວຂ້ອງ ຕາມວັກທີ 1 ໃນມາດຕານີ້, ແລະ ຜູ້ທີ່ໄດ້ເຂົ້າຮ່ວມໃນການສືບສວນສອບສວນບໍ່ໃຫ້ມີໄພອັນຕະລາຍໃດໆ, ຖືກຂົ່ມຂູ່ ຫຼື ໄດ້ຮັບ ໂທດຈາກການພະຍາຍາມຊອກຫາຂໍ້ມູນກ່ຽວກັບຜູ້ທີ່ຖືກຕັດອິດສະລະພາບ.

    ຫຼັກການຂ້າງເທິງນີ້ຄວນໄດ້ຮັບການຈັດຕັ້ງປະຕິບັດໃນທຸກຂັ້ນຂອງຂະບວນການສືບສວນສອບສວນ ພ້ອມທັງ ໃຫ້ການເຄົາລົບນັບຖືຜົນທີ່ໄດ້ຈາກການດໍາເນີນງານທີ່ບາງຄັ້ງອາດຈະກະທົບກັບຄອບຄົວຕາມທີ່ໄດ້ກໍານົດໃນມາດຕາ 20 ຂອງສົນທິສັນຍາສາກົນວ່າດ້ວຍການປ້ອງກັນບຸກຄົນຈາກການຖືກບັງຄັບໃຫ້ຫາຍສາບສູນ (ICPPED).

    ຫຼັງຈາກສອງປີຜ່ານໄປ, ທ່ານນາງ Ng Shui Meng ໄດ້ຮັບຂໍ້ມູນຈາກທາງລັດຖະບານ ສປປ ລາວ ພຽງແຕ່ໜ້ອຍດຽວ. ການຕິດຕໍ່ສື່ສານກັບເຈົ້າໜ້າທີ່ຕໍາຫຼວດຂອງທ່ານນາງ Ng Shui Meng ໃນເດືອນ ສິງຫາ 2013 ກໍ່ແມ່ນຖືວ່າໄດ້ເປັນຄັ້ງລ່າສຸດ.

    ອີງຕາມຂໍ້ມູນຂ່າວສານທີ່ມີ, ມັນໄດ້ສະແດງໃຫ້ເຫັນວ່າທາງລັດຖະບານລາວບໍ່ສາມາມດຕອບສະໜອງຂໍ້ມູນຢ່າງພຽງພໍໃຫ້ທາງ ຄອບຄົວ ທ່ານ ສົມບັດ ຖ້າທຽບໃສ່ພັນທະຂອງລັດຖະບານລາວທີ່ມີໃນກົດໝາຍສາກົນ. ທຸກຂໍ້ມູນທີ່ໄດ້ຮັບກ່ຽວກັບຄວາມຄືບໜ້າ ແລະ ສິ່ງທີ່ກ່ຽວຂ້ອງຈາກໜ່ວຍງານສືບສວນສອບສວນທາງຄອບຄົວ ກໍ່ໄດ້ໃຫ້ຄວາມນັບຖື ແລະ ເຊື່ອໝັ້ນວ່າ--ບັນຫານີ້ແມ່ນຈະຕ້ອງໄດ້ຮັບການແກ້ໄຂ.

## ການກວດສອບດ້ານແບບແຜນການດໍາລົງຊີວິດ

ທາງເຈົ້າໜ້າທີ່ລາວຄວນຈະດໍາເນີນການກວດສອບແບບແຜນການດໍາລົງຊີວິດຂອງທ່ານສົມບັດສົມພອນເພື່ອນໍາ ໄປທົດສອບກັບຂໍ້ສົມມຸດຕິຖານທີ່ກ່ຽວຂ້ອງ ແລະ ມັນຍັງຈະຊ່ວຍເພີ່ມເຕີມສິ່ງທີ່ຍັງຕ້ອງການຢາກຮູ້ບາງຢ່າງທີ່ ການສອບຖາມດ້ານອື່ນໆບໍ່ສາມາດຄົ້ນຫາໄດ້.

ຂະບວນການຂ້າງເທິງນີ້ຖືວ່າມີຄວາມສໍາຄັນຫຼາຍໃນກໍລະນີຂອງທ່ານ ສົມບັດ ສົມພອນ, ຄວາມສໍາຄັນທີ່ວ່ານີ້ກໍ່ຈະ ກ່ຽວຂ້ອງກັບຂໍ້ມູນທີ່ທາງການລາວໄດ້ອອກຖະແຫຼງການວ່າກໍລະນີຂອງທ່ານ ສົມບັດ ສົມພອນ ແມ່ນມີຄວາມເປັນໄປໄດ້ວ່າກ່ຽວຂ້ອງກັບຄວາມຂັດແຍ່ງສ່ວນຕົວຂອງຜູ້ກ່ຽວເອງອອກສື່ໜັງສືພິມ ວຽງຈັນທາມ ໃນວັນ ທີ 4 ກຸມພາ 2013, ກ່າວໂດຍ ກະຊວງປ້ອງກັນຄວາມສະຫງົບວ່າ:

ຖ້າການຫາຍສາບສູນຂອງທ່ານ ສົມບັດ ສົມພອນເປັນເລື່ອງເກີດຂຶ້ນແທ້, ນັ້ນກໍ່ຍ້ອນອາດຈະເປັນຍ້ອນຄວາມຂັດແຍ່ງສ່ວນຕົວ ຫຼື ຂັດແຍ່ງທາງທຸລະກິດ ຫຼື ຍ້ອນຄວາມຂັດແຍ່ງອື່ນໆ.

ດັ່ງນັ້ນ ການຄົ້ນຫາແບບແຜນການດໍາລົງຊີວິດຂອງທ່ານ ສົມບັດຈຶ່ງມີຄວາມຈໍາເປັນເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຫາຄວາມຈິງໃນການຫາຍຕົວໄປຂອງຜູ້ກ່ຽວວ່າເປັນຍ້ອນວຽກງານ ຫຼື ຍ້ອນພຶດຕິກໍາຂອງຜູ້ກ່ຽວເອງ ທີ່ເຮັດໃຫ້ເປັນ ໄພອັນຕະລາຍແກ່ຕົວເອງ.

ການຄົ້ນຫາແບບແຜນການດຳລົງຊີວິດແມ່ນຕ້ອງໄດ້ສອບຖາມບັນດາພະຍານຕ່າງໆ ທີ່ກ່ຽວຂ້ອງວ່າ ທ່ານສົມບັດ ແມ່ນຕົກຢູ່ໃນກໍລະນີຖືກຂົ່ມຂູ່, ຫຼື ຜູ້ກ່ຽວເອງ ແລະ ຄົນອື່ນໆອ້ອມຂ້າງກໍ່ມີຄວາມຮູ້ສຶກຄືກັນວ່າທ່ານ ສົມບັດກຳລັງ ຖືກຕິດຕາມ, ຫຼື ມີຄວາມກັງວົນໃນຄວາມປອດໄພຕໍ່ຊີວິດຂອງຜູ້ກ່ຽວ.

**ຊຸດຂໍ້ມູນພື້ນຖານທີ່ຄວນມີການສອບຖາມ:**

- ຮູບແບບການໃຊ້ຊີວິດຂອງຜູ້ກ່ຽວ
- ບຸກຄົນຕ່າງໆ ທີ່ຜູ້ກ່ຽວຕິດຕໍ່ສື່ສານ
- ນິໃສ ແລະ ກິດຈະກຳຍາມວ່າງຂອງຜູ້ກ່ຽວ
- ພາຫະນະໃນການເດີນທາງຂອງຜູ້ກ່ຽວ
- ເສັ້ນທາງໃດທີ່ຜູ້ກ່ຽວໃຊ້ທຽວປະຈຳ
- ເງິນເດືອນ ແລະ ລາຍໄດ້, ລາຍລະອຽດການໃຊ້ຈ່າຍຕ່າງໆຂອງຜູ້ກ່ຽວ, ແລະ ມີໜີ້ສິນກັບໃຜແດ່
- ເຫດການຕ່າງໆທີ່ຜ່ານມາໂດຍສະເພາະແມ່ນສິ່ງທີ່ກ່ຽວຂ້ອງກັບບົດບາດຂອງຜູ້ກ່ຽວໃນການຈັດກອງປະຊຸມ ພາກປະຊາສັງຄົມ ອາຊີ ເອີຣົບ ເມື່ອເດືອນຕຸລາ 2012
- ກິດຈະກຳທີ່ຜູ້ກ່ຽວມັກເຮັດໃນແຕ່ລະມື້
- ລັກຊະນະບຸກຄະລິກສ່ວນຕົວຂອງຜູ້ກ່ຽວ
- ລັກຊະນະການໂຕ້ຕອບຕໍ່ບັນຫາຕ່າງໆ ຂອງຜູ້ກ່ຽວ
- ຈຸດອ່ອນຂອງຜູ້ກ່ຽວ
- ລັກຊະນະນິໄສທີ່ເປັນຈຸດພິເສດຂອງຜູ້ກ່ຽວ

**ຂໍ້ມູນຂ້າງເທິງນີ້ສາມາດຄົ້ນຫາໄດ້ຈາກ:**

- ຄອບຄົວ
- ໝູ່ຄູ່ມິດສະຫາຍ
- ເພື່ອນຮ່ວມງານ
- ຄູ່ຮ່ວມຊີວິດ
- ບຸກຄົນທີ່ອາດມີຄວາມມຸ້ງໝາຍທີ່ຈະລັກພາຕົວທ່ານ ສົມບັດ ສົມພອນໄປ
- ຄົນອື່ນໆ ທີ່ຜູ້ກ່ຽວໄດ້ມີການຕິດຕໍ່ສື່ສານ

ເຈົ້າໜ້າທີ່ຂອງລາວຄວນຈະອະທິບາຍເພື່ອສ້າງຄວາມກະຈ່າງແຈ້ງວ່າໄດ້ດຳເນີນການໄປແນວໃດແດ່ ແລ້ວໃນຫຼັງຈາກທີ່ໄດ້ເກັບກຳຂໍ້ມູນຕາມແນວທາງຂ້າງເທິງນັ້ນ.

## ເຄື່ອງມືທາງເທັກໂນໂລຍີ

ປະສານງານກັບຄອບຄົວເພື່ອນຳເອົາທຸກເຄື່ອງມືສື່ສານຂອງທ່ານ ສົມບັດ ສົມພອນ ທີ່ເປັນຂອງສ່ວນຕົວ ແລະ ເປັນຂອງຫ້ອງການມາ ກວດເບິ່ງຄືນພ້ອມທັງດຳເນີນການວິເຄາະຫາຂໍ້ມູນທີ່ສາມາດນຳໃຊ້ປະກອບເຂົ້າໃນການສືບສວນສອບສວນໄດ້.

ຂໍ້ມູນທີ່ຕ້ອງການນັ້ນອາດແມ່ນການນັດໝາຍ ແລະ ມີຄຳເວົ້າທີ່ສະແດງໃຫ້ເຫັນຄວາມຫວາດກົວຕໍ່ຄວາມປອດໄພໃນຊີວິດ ຫຼື ຂໍ້ມູນການເຄື່ອນໄຫວຫຼັງຈາກວັນທີ 15 ເດືອນທັນວາ 2012 ທີ່ສາມາດເຊື່ອມໂຍງໃຫ້ເຫັນຫຼັກຖານທີ່ຈະມີຜົນຕໍ່ຊີວິດ ຫຼື ມີສິ່ງທີ່ໜ້າ ສົງໄສອື່ນໆ.

## ຍຸດທະສາດທາງກ້ອງວົງຈອນປິດ

ມາຮອດປະຈຸບັນພາບບັນທຶກໃນກ້ອງວົງຈອນປິດໄດ້ກາຍເປັນເຄື່ອງມືທີ່ສຳຄັນທີ່ຈະສະແດງໃຫ້ເຫັນສິ່ງທີ່ເກີດຂຶ້ນໃນວັນທີ 15 ທັນວາ 2012



ກ້ອງວົງຈອນປິດ: ທ່ານ ສົມບັດ ສົມພອນ ພ້ອມດ້ວຍລົດຂອງທ່ານຢູ່ທີ່ປ້ອມຕຳຫຼວດ

ພາບໃນກ້ອງວົງຈອນປິດສະແດງໃຫ້ເຫັນທີ່ໄປທີ່ມາຂອງເລື່ອງທີ່ເກີດຂຶ້ນກ່ຽວກັບທ່ານ ສົມບັດ ສົມພອນໄດ້ເປັນຢ່າງດີ.

ເຈົ້າໜ້າທີ່ທາງການລາວຕ້ອງອອກມາສ້າງຄວາມຈະແຈ້ງວ່າໄດ້ດຳເນີນການກັບພາບທີ່ເຫັນນັ້ນແນວໃດ ແລະ ໄດ້ນຳໃຊ້ຂໍ້ມູນທີ່ມີໃນ ກ້ອງດັ່ງກ່າວເຂົ້າໃນການສືບສວນສອບສວນແບບໃດ.



ກ້ອງວົງຈອນ: ລົດຂອງທ່ານ ສົມບັດກຳລັງຖືກຄັບອອກໄປ

ກ້ອງວົງຈອນປິດຂອງຕຳຫຼວດໄດ້ສະແດງໃຫ້ເຫັນ ຢ່າງຊັດເຈນວ່າມີການລັກພາຕົວທ່ານສົມບັດໄປໃນວັນທີ 15 ທັນວາ 2012.

ພາບບັນທຶກຈາກຕົ້ນສະບັບທີ່ທາງຄອບຄົວຂອງທ່ານ ສົມບັດໄດ້ເບິ່ງ ແລະ ບັນທຶກພາບເຫດການທີ່ ໄດ້ເຫັນ ທ່ານສົມບັດເປັນຄັ້ງສຸດທ້າຍໃນການຖືກຕຳຫຼວດກັກ ຕົວ. ພາບຕົ້ນສະບັບແມ່ນທາງຄອບຄົວ ແລະ ພະນັກ ງານອົງການ PADETC ໄດ້ໃຊ້ກ້ອງ ແລະ ໂທລະສັບມື ຖືກບັນທຶກພາບໄວ້.



ກ້ອງວົງຈອນ: ທ່ານສົມບັດສົມພອນ ຂຶ້ນໄປໃນລົດກະບະ

ພາບບັນທຶກຕົ້ນສະບັບຕ້ອງໄດ້ຮັບການຮັກສາດູແລ ເປັນພິເສດເພື່ອຮັກສາໃຫ້ຢູ່ໃນສະພາບເດີມໄດ້ຍາວນານທີ່ສຸດ. ເພື່ອເປັນການຮັກສາດູແລໃຫ້ໄດ້ດີກໍ່ ແມ່ນບໍ່ຄວນໃຫ້ມີການກອັບປີ້ຫຼາຍໆເທື່ອເພາະມັນ ຈະເຮັດໃຫ້ສະພາບຂອງຂໍ້ມູນນັ້ນເຊື່ອມສະພາບໄປ ຈາກເດີມ.

ພາບບັນທຶກທີມີນັ້ນຄວນຈະສົ່ງໃຫ້ຜູ້ຊ່ຽວຊານທີ່ມີອິດສະຫລະ ແລະ ມີຄວາມສາມາດເປັນທີ່ຍອມຮັບດຳ ເນີນການກວດສອບ ແລະ ວິເຄາະທາງດ້ານນິຕິວິທະ ຍາ. ການດຳເນີນການເຊັ່ນນີ້ແມ່ນມັນສາມາດຊ່ວຍ ໃຫ້ຂໍ້ມູນໄດ້ຖືກເກັບຮັກສາໄວ້ເປັນຢ່າງດີພ້ອມທັງຈະສາມາດຄົ້ນຫາຂໍ້ມູນທີ່ສຳຄັນເຊັ່ນ: ປ້າຍລົດທີ່ກ່ຽວ ຂອ້ງໃນທີ່ເກີດເຫດ ແລະ ອື່ນໆ. ເພື່ອຈະໃຫ້ດີ ພາບ ບັນທຶກທີ່ໄດ້ມານັ້ນຄວນໄດ້ຮັບການບັນທຶກຈາກຕົ້ນສະບັບບໍ່ແມ່ນໄດ້ມາຈາກພາບບັນທຶກທີ່ກ໊ອບປີ້ມາແລ້ວ.

ເຖິງຢ່າງໃດກໍ່ຕາມ, ເຖິງວ່າພາບບັນທຶກທີ່ໄດ້ມານັ້ນແມ່ນພາບເຫດການທີ່ເກີດຂຶ້ນຈິງທີ່ບໍ່ໄດ້ມີການສັບປ່ຽນຈາກ ຕົ້ນສະບັບກໍ່ຕາມ, ແຕ່ພາບບັນທຶກທີ່ໄດ້ມານັ້ນຄວນສົ່ງໃຫ້ຜູ້ຊ່ຽວຊານເພື່ອມີຄວາມຄິດເຫັນເພື່ອກວດຊອບຫາຂໍ້ມູນ ຂອງເຫດການທີ່ເກີດຂຶ້ນ. ຖ້າຫາກໄດ້ພົບເຫັນຂໍ້ມູນທີ່ຕ້ອງການແລ້ວ, ພາບບັນທຶກຕົ້ນສະບັບກໍ່ຄວນໄດ້ນຳມາມອບ ໃຫ້ຜູ້ຊ່ຽວຊານທີ່ມີອິດສະດຳເນີນການວິເຄາະທາງນິຕິວິທະຍາຕໍ່ໄປ.

ສິ່ງທີ່ສຳຄັນທີ່ຄວນໃສ່ໃຈກໍ່ຄືເພື່ອຫລຸດຜ່ອນຄວາມຜິດຫວັງທີ່ຄາດຫວັງຈະໄດ້ຮັບດັ່ງທີ່ຕ້ອງການຈາກການດຳ ເນີນງານນັ້ນ, ການອອກຄຳເຕືອນແນະນຳຊີ້ແຈງໃຫ້ເຫັນຜົນທີ່ຈະໄດ້ຮັບນັ້ນມັນອາດກົງກັນຂ້າມກັບສິ່ງທີ່ຄາດຫວັງ ແຕ່ຕົ້ນກໍ່ເປັນໄດ້ເຖິງແມ່ນວ່າພາບໃນກ້ອງວົງຈອນປິດນັ້ນຈະມີບາງຢ່າງທີ່ໜ້າເຊື່ອຖືໄດ້ກໍ່ຕາມ. ອີງຕາມປະສົບ ການທີ່ຜ່ານມາກໍ່ເຄີຍເກີດມາແລ້ວວ່າຜົນທີ່ໄດ້ຮັບນັ້ນມັນບໍ່ໄດ້ຕາມທີ່ຄາດຫວັງມາກ່ອນ.

## ການຄົ້ນຫາພາບບັນທຶກ ຫຼື ຮູບພາບອື່ນໆທີ່ກ່ຽວຂ້ອງ

ເຈົ້າໜ້າທີ່ທາງການລາວຄວນຈະສະແດງຄວາມຈະແຈ້ງອອກມາວ່າໄດ້ມີການດຳເນີນການຄົ້ນຫາຂໍ້ມູນແນວໃດແດ່ ຈາກພາບບັນທຶກໃນກ້ອງວົງຈອນປິດ ຫຼື ຮູບພາບອື່ນໆທີ່ກ່ຽວຂ້ອງນອກເໜືອຈາກພາບທີ່ໄດ້ສະແດງຂ້າງເທິງນັ້ນ. ການຄົ້ນຫາແມ່ນລວມມີທາງດ້ານວັດຖຸທີ່ຮອບລວມມາຕ່າງຫາກຈາກການສືບສວນສອບສວນຂອງເຫດການທີ່ເກີດຂຶ້ນ.

ອີງຕາມຂໍ້ມູນໃນເວັບໄຊ, “ທ່ານ ສົມບັດ ສົມພອນ, ‘ຊ່ວຍພວກເຮົາຕາມຫາເພື່ອນແດ່’ ” ມັນໄດ້ສະແດງໃຫ້ເຫັນ ວ່າມີກ້ອງວົງຈອນເຖິງ 5 ໜ່ວຍໃກ້ບ່ອນເກີດເຫດທີ່ປ້ອມຕຳຫຼວດ. ຕໍ່ບັນຫານີ້ທາງການລາວຄວນອອກມາອະທິບາຍ ເຫດຜົນໃຫ້ຮູ້ວ່າໄດ້ກວດສອບ ກ້ອງເຫລົ່ານັ້ນແລ້ວຫຼືບໍ່ວ່າພວກມັນໃຊ້ການໄດ້ບໍ່ໃນເວລາເກີດເຫດ, ຫຼືວ່າໄດ້ກວດ ກາພາບບັນທຶກໃນກ້ອງເຫລົ່ານັ້ນແລ້ວ, ແລະ ຖ້າດຳເນີນການແລ້ວກໍ່ຂໍໃຫ້ເປີດເຜີຍຜົນທີ່ໄດ້ຈາກການດຳເນີນງານ ນັ້ນອອກມາ.

ການດຳເນີນການກວດສອບນັ້ນຄວນນຳເອົາແຜນທີ່ຕົວເມືອງຂອງນະຄອນຫຼວງວຽງຈັນມາເບິ່ງຈຸດທີ່ເຂົ້າອອກທັງໝົດໃນນະຄອນຫຼວງວຽງຈັນ. ຖ້າດຳເນີນການໄດ້ເຊັ່ນນີ້ມັນສາມາດຊ່ວຍໃນການຄົ້ນຫາເສັ້ນທາງຜ່ານເຂົ້າອອກຕົວເມືອງ ແລະ ຈຸດເຂົ້າອອກຈາກປ້ອມຕຳຫລວດ. ຫຼັງຈາກນັ້ນກໍ່ເອົາຂໍ້ມູນທີ່ໄດ້ມາວິເຄາະຫາກ້ອງວົງຈອນປິດແຕ່ລະແຫ່ງທີ່ສາ ມາດບັນທຶກການເຂົ້າອອກທີ່ກ່ຽວຂ້ອງໄດ້.

ການກວດສອບກ້ອງວົງຈອນປິດນັ້ນກໍ່ຄວນກວດສອບກ້ອງທີ່ມີຢູ່ໃນຫລາຍແຫ່ງໄປພ້ອມໆກັນເຊັ່ນ:

- ກວດສອບກ້ອງທີ່ຢູ່ໃກ້ກັບປ້ອມຕຳຫຼວດບ່ອນເກີດເຫດທີ່ຄາດວ່າພາຫານະທີ່ກ່ຽວຂ້ອງໄດ້ມາລໍຖ້າຮັບເອົາຕົວທ່ານ ສົມບັດສົມພອນນັ້ນຈອດຢູ່ບໍລິເວັນດັ່ງກ່າວ
- ກວດສອບກ້ອງທີ່ຄາດວ່າລົດຂອງທ່ານສົມບັດສົມພອນ ຫຼື ລົດຂອງຜູ້ຕ້ອງສົງໃສອື່ນໆນັ້ນໄດ້ເດີນທາງເຂົ້າອອກໄປຍັງ ຄ້າຍທະຫານ, ຄ້າຍຕຳຫຼວດ ແລະ ຄ້າຍອື່ນໆ
- ກວດສອບກ້ອງຕາມສະຖານທີ່ທີ່ຄາດວ່າທ່ານສົມບັດ, ຜູ້ທີ່ຕ້ອງສົງໃສ ຫຼື ພະຍານໄດ້ນຳໃຊ້ໂທລະສັບໃນບໍລິເວນໃດໜຶ່ງ
- ກວດສອບກ້ອງໃນບໍລິເວນທີ່ຢູ່ອາໄສ ແລະ ຫ້ອງການຂອງ ທ່ານ ສົມບັດເພື່ອວ່າຈະໄດ້ພົບການສອດແນມບາງຢ່າງ

ຖ້າຕຶກໃນກໍລະນີທີ່ທ່ານ ສົມບັດຖືກຕິດຕາມມາເປັນໄລຍະໃດໜຶ່ງເພື່ອຈະປະຕິບັດການລັກພາຕົວມັນກໍ່ຕ້ອງມີຫຼັກຖານອັນໃດ ໜຶ່ງທີ່ສາມາດພົບເຫັນເຖິງການສອດແນມຈາກທີມງານໃດໜຶ່ງ. ດັ່ງນັ້ນ ຂໍ້ມູນທີ່ວ່ານີ້ແມ່ນມີຄວາມສຳຄັນທີ່ຕ້ອງໄດ້ຄົ້ນ ຫາ, ລວບລວມ ແລະ ກວດສອບ.

ມາຮອດປະຈຸບັນທາງການລາວຄວນຈະໄດ້ຮວບລວມຂໍ້ມູນທັງໝົດໃນກ້ອງວົງຈອນປິດ, ສ້າງເປັນເອກະສານ, ເຜີຍແຜ່ ແລະ ກວດສອບ ຢ່າງເປັນລະບົບເພື່ອຄົ້ນຫາຫຼັກຖານໂດຍສະເພາະແມ່ນພະຫານະທີ່ກ່ຽວຂ້ອງ, ສີຂອງລົດຄັນດັ່ງກ່າວ, ແລະ ປ້າຍທະບຽນລົດນັ້ນແມ່ນຫຍັງ ແລະ ເຮັດຢູ່ໃສເພື່ອຈະຈັດວາງລຳດັບຂອງເຫດການທີ່ເກີດຂຶ້ນໄດ້.




ສະຖານທີ່ທີ່ອາດຈະມີກ້ອງວົງຈອນປິດຕິດຕັ້ງໃກ້ກັບປ້ອມຕຳຫລວດ

ວັດຖຸປະສົງຂອງການກວດສອບກໍ່ແມ່ນເພື່ອຄົ້ນຫາຜູ້ທີ່ມີໄດ້ພົວ ພັນກັບທ່ານສົມບັດໃນຕອນນັ້ນ, ເຊິ່ງລວມມີທັງຄົນຂັບລົດ, ເຈົ້າ ຂອງລົດກະບະຄັນທີ່ກ່ຽວຂ້ອງດັ່ງກ່າວ, ຜູ້ທີ່ໄດ້ຂັບລົດຂອງທ່ານ ສົມບັດອອກໄປ ແລະ ຜູ້ອື່ນໆຢູ່ໃນລົດ. ພາບບັນທຶກຈາກກ້ອງ ນັ້ນຍັງຈະສາມາດສະແດງໃຫ້ເຫັນເຖິງເສັ້ນທາງທີ່ໃຊ້ເຂົ້າອອກ ຫາປ້ອມຕຳຫຼວດ ແລະ ບັນດາຜູ້ທີ່ເຫັນເຫດການອີກນຳ.

## ຍຸດທະວິທີທາງການສື່ສານ

ເຈົ້າໜ້າທີ່ທາງການລາວຄວນຈະອອກມາສະແດງຄວາມໂປ່ງ ໃສວ່າໄດ້ດຳເນີນການແນວໃດແດ່ແລ້ວຕໍ່ກັບສົມມຸດຕິຖານທີ່ມີ ວ່າທາງເຈົ້າໜ້າທີ່ຕຳຫຼວດໄດ້ມີການສື່ສານກັບບຸກຄົນທີ່ກ່ຽວ ຂ້ອງທີ່ໄດ້ລັກພາຕົວທ່ານສົມບັດໄປ, ຖ້າສົມມຸດວ່າໄດ້ ດຳເນີນ ການໄປແລ້ວກໍ່ຂໍໃຫ້ອອກມາສະແດງເຫດຜົນວ່າໄດ້ດຳເນີນການ ໄປແບບໃດ, ແລະ ຜົນທີ່ໄດ້ນັ້ນມີຫຍັງແດ່.

ການສື່ສານຂ້າງເທິງນັ້ນອາດເປັນໄປໄດ້ວ່າມີການສື່ສານ ກັນຜ່ານທາງເຄື່ອງວິທະຍຸສື່ສານ. ເຖິງຢ່າງໃດກໍ່ດີ, ຕາມປົກ ກະຕິແລ້ວການສື່ສານລະຫວ່າງຕຳຫຼວດ, ເຈົ້າໜ້າທີ່ຮັກສາຄວາມປອດໄພ, ແລະ ກຸ່ມກໍ່ການຮ້າຍສະໄໝໃໝ່ຍັງນຳ ໃຊ້ໂທລະສັບໃນ ການສື່ສານກັນຫຼາຍກ່ວາທີ່ຈະນຳໃຊ້ເຄື່ອງວິ ທະຍຸສື່ສານເພາະວ່າໃນປະຈຸບັນມັນຫາຍາກ ແລະ ບໍ່ມີປະສິດທິພາບພຽງພໍ.

ເຈົ້າໜ້າທີ່ທາງການລາວຄວນຈະອອກມາອະທິບາຍວ່າ ໄດ້ດຳເນີນການໄປແນວໃດແດ່ແລ້ວ, ມີການເກັບບັນທຶກ ສຽງການສົນທະນາດັ່ງກ່າວບໍ່, ຖ້າໄດ້ບັນທຶກແລ້ວ, ໄດ້ເກັບລວບລວມເອົາອຸປະກອນເຫຼົ່ານັ້ນໄວ້ບໍ່, ຫຼືວ່າໄດ້ ກວດສອບອຸປະກອນເຫຼົ່ານັ້ນບໍ່ວ່າແມ່ນອຸປະກອນສື່ສານແບບໃດ.

## ໂທລະສັບ "ຖ່າຍໂອນຂໍ້ມູນ"

ເຈົ້າໜ້າທີ່ທາງການລາວຄວນຈະສະແດງຄວາມຈະແຈ້ງວ່າໄດ້ດຳເນີນການຂໍໃຫ້ບໍລິສັດໂທລະຄົມທີ່ກ່ຽວຂ້ອງໂອນ ຫຼື ໂຫລດຂໍ້ມູນຂອງການສົນທະນານັ້ນໃຫ້ແລ້ວ ຫຼືບໍ່.

ການດຳເນີນການໃນຂັ້ນຕອນນີ້ທາງເຈົ້າໜ້າທີ່ແມ່ນມີສິດຂໍໃຫ້ບໍລິສັດໂທລະຄົມຮ່ວມມືໃນການໃຫ້ເອົາຂໍ້ມູນອອກມາໃນໄລຍະເວລາໃດໜຶ່ງທີ່ກຳນົດ. ຫຼັງຈາກນັ້ນທາງເຈົ້າໜ້າທີ່ສືບສວນສອບສວນຈະເອົາຂໍ້ມູນທີ່ໄດ້ມາຄົ້ນຫາວ່າແມ່ນ ເບີຂອງໃຜ, ຢູ່ໃສ ແລະ ຍັງສາມາດຄົ້ນຫາວ່າການໃຊ້ໂທລະສັບນັ້ນແມ່ນຢູ່ບ່ອນໃດແດ່ (ລະບົບນີ້ແມ່ນໄດ້ຖືກນຳໃຊ້ ຢູ່ໃນຫຼາຍປະເທດໂດຍສະເພາະແມ່ນຢູ່ປະເທດອັງກິດ, ອາເມລິກາ, ຝຣັ່ງ ແລະ ອິດສະຕາລີ ເພື່ອຈຸດປະສົງໃນການສືບສວນສອບສວນທີ່ມີປະ ສິດທິພາບ).

ຂໍ້ມູນທີ່ໄດ້ຈາກຂ້າງເທິງນັ້ນສາມາດຊ່ວຍໃນຄົ້ນຫາເບີໂທລະສັບທີ່ທາງຕຳຫຼວດໄດ້ສື່ສານນຳໃນປ້ອມຕຳຫຼວດ ໃນວັນທີ 15 ທັນວາ 2012, ເວລາ 18:00. ນອກນັ້ນມັນຍັງສາມາດທີ່ຈະຊ່ວຍໃຫ້ການຄົ້ນຫາເຈົ້າຂອງເບີໂທລະສັບທີ່ ສື່ສານກັບຕຳຫຼວດ ແລະ ຜູ້ທີ່ເປັນຄົນຂັບລົດຂອງທ່ານ ສົມບັດອອກໜີໄປ.

**ຂໍ້ມູນທາງໂທລະສັບທີ່ຕ້ອງການຈາກບໍລິສັດໂທລະຄົມແມ່ນ:**

- ການສື່ສານໃນປ້ອມຕຳຫຼວດ ຫຼັກ 3, ຖະໜົນທ່າເດື່ອ, ໃນວັນທີ 15 ທັນວາ 2012 ໃນລະຫວ່າເວລາ 16:00–19:00
- ການສື່ສານທີ່ຢູ່ໃນບ່ອນຈອດລົດ ແລະ ໃນສະຖານທີ່ໃກ້ກັບປ້ອມຕຳຫຼວດໃນເວລາທີ່ມີການລໍຖ້າຮັບຕົວທ່ານສົມບັດ ສົມພອນ ແລະ ເດີນທາງມາຮອດປ້ອມໃນວັນທີ 15 ທັນວາ, ໃນລະຫວ່າເວລາ 16:00–19:00
- ການສື່ສານທີ່ຄ້າຍທະຫານ, ຄ້າຍຕຳຫຼວດ, ແລະ ສະຖານທີ່ອື່ນໆທີ່ຄາດຄະເນວ່າຕົວທ່ານ ສົມບັດ ແລະ ຍານາຫະນະ ຂອງລາວ ໄດ້ຖືກລັກພາໄປໃນສະຖານທີ່ດັ່ງກ່າວ ໃນລະຫວ່າງເວລາ 18:00–21:00
- ການສື່ສານທີ່ບ້ານ ແລະ ສະຖານທີ່ເຮັດວຽກຂອງທານ ສົມບັດສົມພອນ

## ຂໍ້ມູນທາງໂທລະສັບທີ່ຕ້ອງການຈາກບໍລິສັດໂທລະຄົມ

ເຈົ້າໜ້າທີ່ທາງການລາວຄວນອອກມາສະແດງຄວາມຈະແຈ້ງວ່າໄດ້ດຳເນີນການກວດສອບໂທລະສັບທີ່ກ່ຽວຂ້ອງ ແລ້ວຫຼືຍັງ, ຖ້າໄດ້ດຳເນີນການ ແລ້ວກໍ່ຂໍໃຫ້ອະທິບາຍວ່າໄດ້ມີການເກັບລວບລວມຂໍ້ມູນຈາກໂທລະສັບເຫຼົ່ານັ້ນຫຼືບໍ່.

ໂທລະສັບທີ່ກ່ຽວຂ້ອງທີ່ມີຄວາມເປັນໄປໄດ້ກໍ່ຈະແມ່ນໂທລະສັບຂອງທ່ານ ສົມບັດ ສົມພອນ, ຂອງພັນລະຍາ, ຂອງຕຳ ຫຼວດທີ່ປະຕິບັດໜ້າທີ່ໃນປ້ອມຕຳຫຼວດບ່ອນເກີດເຫດ, ແລະ ຂອງຜູ້ທີ່ມີຂໍ້ມູນສະແດງໃຫ້ເຫັນເຖິງການໃຊ້ໂທລະສັບ ທີ່ກ່ຽວຂ້ອງຈາກຂໍ້ມູນຂອງບໍລິສັດໂທລະຄົມ.

ການຮຽກຮ້ອງຂໍຂໍ້ມູນນຳບໍລິສັດໂທລະຄົມນັ້ນຄວນຈະຂໍລາຍລະອຽດຂອງຜູ້ທີ່ໃຊ້ເບີໂທລະສັບດັ່ງກ່າວເຊັ່ນ: ວິທີການ ຊຳລະຄ່າໂທລະສັບ, ຂໍ້ມູນການໂທເຂົ້າອອກ ແລະ ໂທຢູ່ສະຖານທີ່ໃດແດ່, ແລະ ຂໍຂໍ້ມູນອື່ນໆທີ່ທາງບໍລິສັດສາມາດ ໃຫ້ໄດ້ເຊັ່ນ: ຂໍ້ມູນທາງຂໍ້ຄວາມຕ່າງໆ (ຂໍ້ຄວາມຂຽນ, ແລະ ຮູບພາບທີ່ສົ່ງຫາກັນ). ຂໍ້ຄວາມສົນທະນາ ແລະ ໂຕເລກລະຫັດບໍລິສັດໂທລະສັບມືຖືສາກົນ (IMEI), (IMEI–ມີລະຫັດສະເພາະໃນໂທລະສັບ). IMEI ສາມາດຊ່ວຍ ຄົ້ນຫາສະນິດ, ຮູບແບບ, ແລະ ຄວາມສາມາດໃນການໃຊ້ງານຂອງໂທລະສັບ.

**ໂທລະສັບສະມາດໂຟນ**

ໂທລະສັບສະມາດໂຟນທີ່ທ່ານ ສົມບັດ ຫຼື ຜູ້ທີ່ຕ້ອງສົງໃສໄດ້ນຳໃຊ້ໃນບ່ອນເກີດເຫດກໍ່ຄວາມນຳມາພິຈາລະນາຫາຈຸດສົນ ຍານໄວຟາຍ ແລະ ອິນເຕີເນັດທີ່ນຳໃຊ້ໃນເວລານັ້ນ. ເຫດຜົນກໍ່ຄືວ່າຜູ້ທີ່ຕ້ອງສົງໃສອາດມີການນຳໃຊ້ອິນເຕີເນັດໃນ ການສື່ສານປະ ສານງານເພື່ອປະຕິບັດໜ້າທີ່.

## ຍຸດທະສາດທາງນິຕິວິທະຍາ

ມາດຕາທີ 100 ຂອງກົດໝາຍອາຍາປີ 2012 ຂອງ ສປປ ລາວກຳນົດວ່າເຈົ້າໜ້າທີ່ທາງກົດໝາຍແມ່ນມີພັນທະທີ່ຈະດຳ ເນີນການເກັບຮັກສາ ສຳນວນຄະດີໄວ້ຢ່າງມີປະສິດທິພາບ.

ອີງຕາມຂໍ້ມູນທີ່ມີຂອງຄະນະກຳມາທິການກົດໝາຍສາກົນທີ່ໄດ້ມາໃນເດືອນທັນວາ 2014 ເຫັນວ່າທາງການລາວບໍ່ ໄດ້ປະ ຕິບັດຕາມພັນທະທີ່ກຳນົດຂ້າງເທິງນີ້.

**ເຈົ້າໜ້າທີ່ສືບສວນສອບສວນຄວນຈະເກັບຮັກສາສຳນວນຂອງຄະດີຄື:**

- ທຸກຄຳໃຫ້ການທີ່ກ່ຽວຂ້ອງກັບຄະດີ
- ຜົນທີ່ໄດ້ຈາກການເປີດປະຊຸມປຶກສາຫາລື
- ຮູບພາບຕ່າງໆ
- ສຽງບັນທຶກຕ່າງໆ
- ເອກະສານ ແລະ ແຟ້ມຕ່າງໆຂອງຕຳຫຼວດ ແລະ ຂອງພາກສ່ວນອື່ນທີ່ກ່ຽວຂ້ອງ
- ຖານຂໍ້ມູນ

- ພາບບັນທຶກໃນກ້ອງວົງຈອນປິດ
- ບົດບັນທຶກກອງຊຸມ
- ຜົນທີ່ໄດ້ຈາກການສືບສວນສອບສວນທາງນິຕິວິທະຍາ ແລະ ດ້ານອື່ນໆ

## ການບໍລິຫານຈັດການທາງວັດຖຸຕ່າງໆ

ເຈົ້າໜ້າທີ່ທາງການລາວຄວນຈະສະແດງຄວາມຈະແຈ້ງວ່າໃນລະຫວ່າງການສືບສວນສອບສວນໄດ້ພາກັນເກັບລວບ ລວມຂໍ້ມູນແບບເປັນຕົວເລກ, ເປັນສາລະຄະດີ, ເປັນລະບົບແຟ້ມອີເລັກໂທນິກ ຫຼື ເປັນຮູບແບບຊີວະວິທະຍາແລ້ວຫຼືຍັງ.

ຮູບແບບການເກັບຂໍ້ມູນຂ້າງເທິງນີ້ຄວນນຳມາເຜີຍແຜ່ ແລະ ມີຄວາມຕ້ອງຈັດລຽງລຳດັບເຫດການຄືນ, ກວດສອບ ແລະ ເກັບຮັກສາໄວ້ຢ່າງປອດໄພ. ສຳລັບຂໍ້ມູນທີ່ໄດ້ມາຈາກການສືບສວນສອບສວນ ແລະ ນຳອອກມາເປີດເຜີຍນັ້ນຄວນ ຈະມີລາຍລະອຽດຕ່າງໆເຊັ່ນ:

- ຄຳອະທິບາຍທີ່ຖືກຕ້ອງກ່ຽວກັບສິ່ງທີ່ໄດ້ພົບເຫັນ
- ສະຖານທີ່ທີ່ພົບເຫັນ
- ວັນເວລາທີ່ໄດ້ພົບເຫັນ
- ໃຜເປັນຜູ້ປະດິດສິ່ງທີ່ພົບເຫັນນັ້ນແທນທີ່ຈະບອກວ່າໃຜພົບເຫັນ
- ໃຜເປັນຜູ້ພົບເຫັນ
- ສະຖານທີ່ ແລະ ວິທີການເກັບຮັກສາ

ໃນກໍລະນີທີ່ມີການເຄື່ອນຍ້າຍຂໍ້ມູນດ້ານວັດຖຸອອກຈາກສະຖານທີ່ເກັບຮັກສາກໍ່ຄວນບັນທຶກໄວ້ເຖິງລາຍລະອຽດວັນທີ, ເວລາ, ເຫດຜົນ, ແລະ ບຸກຄົນທີ່ທຳການເຄື່ອນຍ້າຍ. ໃນເວລານຳເອົາກັບຄືນມາກໍ່ແມ່ນໃຫ້ມີການບັນທຶກ ແບບດຽວ ກັນ.

ຍຸດທະສາດທາງນິຕິວິທະຍາຄວນໄດ້ຮັບການຈັດຕັ້ງປະຕິບັດເພື່ອບໍລິຫານຈັດການສິ່ງທີ່ໄດ້ພົບເຫັນບໍ່ວ່າຈະເປັນລົດຂອງ ທ່ານ ສົມບັດ ສົມພອນ ແລະ ຂອງຜູ້ຕ້ອງສົງໄສ, ສະຖານທີ່ກໍ່ເຫດ, ແລະ ອາດມີການພົບເຫັນຊາກສົບກໍ່ເປັນໄດ້. ຕາມປົກກະຕິແລ້ວ, ການກວດສອບຄວນຖືກດຳເນີນການ ໂດຍຜູ້ທີ່ມີຄວາມສາມາດ ຫຼື ຜູ້ຊ່ຽວຊານທາງອາຍາໃນສະຖານ ທີ່ເກີດເຫດ, ຜູ້ທີ່ໄດ້ຮັບການຝຶກມາຢ່າງເໝາະສົມ, ແລະ ຜູ້ຊ່ຽວຊານທີ່ມີອິດສະໃນການດຳເນີນງານອື່ນໆ-ພ້ອມທັງມອບ ສິ່ງທີ່ພົບເຫັນໃຫ້ແກ່ຊ່ຽວຊານທີ່ມີຄຸນນະວຸດທິເໝາະສົມເປັນທີ່ຍອມຮັບ ແລະ ມີອິດສະຫລະໃນການດຳເນີນການກວດ ສອບດຳເນີນການຕໍ່ໄປ.

## ພາຫະນະ ແລະ ສະຖານທີ່ເກີດເຫດ

ເຈົ້າໜ້າທີ່ທາງການລາວຄວນອອກມາສະແດງຄວາມກະຈ່າງແຈ້ງວ່າໄດ້ດຳເນີນການແນວໃດແດ່ແລ້ວທາງດ້ານນິຕິວິ ທະຍາຕໍ່ກັບສະຖານທີ່ ແລະ ພາຫະນະທີ່ກ່ຽວຂ້ອງ-ເຊິ່ງລວມມີສິ່ງທີ່ໄດ້ເຫັນໃນກ້ອງວົງຈອນປິດ-ນຳໃຊ້ຂໍ້ມູນນັ້ນເພື່ອ ຄົ້ນຫາການດິນທາງ ແລະ ລົດຂອງທ່ານ ສົມບັດ ສົມພອນ, ຖ້າພົບເຫັນ.

ການດຳເນີນການທາງນິຕິວິທະຍາແບບຄົບຖ້ວນກໍຄື ຕົວຢ່າງເຊັ່ນ:

- ດຳເນີນການຄົ້ນຫາລົດທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງເພື່ອກວດສອບ DNA/ເສັ້ນຜົມ ແລະ ຄາບເລືອດທີ່ອາດເຫັນໃນພື້ນ ຜິວທົ່ວໄປ ຫຼື ໃນຮອຍຫຸ້ມຕ່າງໆ
- ຄົ້ນຫາກົ້ນກອກຢາສູບ, ແກ້ວນ້ຳດື່ມ, ແລະ ກວດສອບທາງນິຕິວິທະຍາໃນເບາະນັ່ງ ແລະ ເບາະກ່າຍຫົວ, ເສັ້ນສາຍໄຍຕ່າງໆທີ່ຕິດຕາມຜ້າພົມລົດ, ແລະ ເກັບຕົວຢ່າງອື່ນໆທີ່ຕິດຢູ່ໃນຜ້າພົມເພື່ອໄວ້ເປັນ ຂໍ້ມູນຕໍ່ໄປ.
- ກວດສອບຢາງລົດ, ຝາກະໂປ່ງຫຼັງ, ກ້ອງເບາະລົດ, ບ່ອນທີ່ຫວງຫ້າມຄືບໍລິເວນເກຍລົດ, ສາຍເຂັມຂັດ, ແລະ ບ່ອນໄຂປະຕູລົດ. ສິ່ງເຫລົ່ານີ້ຄວນນຳເອົາມາພິສູດທາງ DNA ແລະ ຮອຍລາຍມື (ສະຖານທີ່ເຫລົ່ານີ້ສ່ວນ ຫລາຍແລ້ວຜູ້ຕ້ອງສົງແມ່ນບໍ່ໄດ້ທຳຄວາມສະອາດ)
- ເມື່ອໄດ້ດຳເນີນການກວດສອບຮອຍລາຍຕົ້ວມືດ້ວຍແປ້ງແລ້ວກໍ່ເລີ່ມດຳເນີນການຫາກາວ CNA. ຂະບວນການທັງ ສອງຢ່າງນີ້ຄວນໃຫ້ປະຕິບັດທັງຢູ່ພາຍໃນ ແລະ ນອກລົດ (ຊິໃຊ້ເວລາດົນປານໃດກໍ່ຕາມ)

- ສິ່ງທີ່ກ່ຽວຂ້ອງຢູ່ໃນລົດກໍ່ຄວນໄດ້ຮັບການເກັບຮັກສາ ແລະ ກວດສອບເຊັ່ນ: ແຜນທີ່, ເຈ້ຍ, ເສື້ອຜ້າ, ແລະ ຂອງໃຊ້ສ່ວນຕົວ
- ເສື້ອຜ້າຄວນຈະສົ່ງໄປກວດຫາ DNA ໂດຍສະເພາະເສື້ອຜ້າທີ່ທ່ານສົມບັດສົມພອນນຸ່ງມາໃໝ່ໆ ແລະ ເຄື່ອງໃຊ້ ສ່ວນ ຕົວທີ່ເຫັນວ່າ ທ່ານ ສົມບັດເປັນເຈົ້າຂອງແທ້ໆກ່ອນທີ່ຈະຖືກຫາຍສາບສູນ
- ໃນເວລາທີ່ລາຍນິ້ວມືໄດ້ຖືກກວດສອບແລ້ວ, ລົດຂອງທ່ານ ສົມບັດກໍ່ຄວນໄດ້ສີດສະເປ Luminol ທົ່ວທັງຄັນລົດ ທັງໃນ ແລະ ນອກລົດ (ເປັນສານເລືອງແສງໃນເລືອດ) ແລະ ສານເລືອງແສງຄວນຈະໃຊ້ (ສຳລັບທັງ ສະຖານທີ່ ເກີດເຫດ ແລະ ໃສ່ຕົວຢ່າງຂອງເລືອດ) ຫຼັງຈາກນັ້ນກໍ່ຖ່າຍຮູບເອົາ (ນຳໃຊ້ເທັກນິກພິເສດຈາກຜູ້ຊ່ຽວຊານ)
- ລົດທີ່ກ່ຽວຂ້ອງກໍ່ຄວນປັດກວດເພື່ອຄົ້ນຫາ DNA, ຄາບຂີ້ຝຸ່ນ ແລະ ຄາບອື່ນໆກໍ່ຄວນເກັບເອົາຈາກຮ່ອງຕີນລົດ ແລະ ຢູ່ໄຕ້ທ້ອງລົດ. ຢາງຕີນລົດກໍ່ຄວນທຳການແກະຮອຍພ້ອມທັງເກັບຮັກສາໄວ້ກັບລົດຄືເກົ່າ
- ເອກະສານທີ່ເປັນຮູບພາບ ແລະ ບົດບັນທຶກທີ່ມີທັງພາບສະເກັດກໍ່ຄວນໄດ້ຮັບການກວດສອບ. ຄວນສວມໃສ່ຊຸດ ເຄື່ອງທີ່ການປ້ອງກັນໃນເວລາກວດສອບເຊັ່ນ: ຊຸດເຄື່ອງໃສ່ໃນທີ່ເກີດເຫດ, ເກີບບຸດ, ໜ້າກາກຄຸມຫົວ, ແລະ ຊົບມື ກໍ່ຄວນປ່ຽນຖ່າຍໃນລະຫວ່າງການເກັບຕົວຢ່າງ DNA ໃນທີ່ກໍ່ອາສະຍາກຳ, ຕົວຢ່າງ: ສະຖານທີ່ທີ່ພົບເຫັນຊາກສົບ ຫຼື ສະຖານທີ່ກັກຂັງ, ແລະ ການດຳເນີນການອື່ນໆກໍຄວນປະຕິບັດເໝືອນກັນ.

## ການພິສູດທາງນິຕິວິທະຍາ

ເປັນທີ່ໜ້າເສຍດາຍທີ່ມີຫຼາຍຄະດີກ່ຽວກັບການຖືກບັງຄັບໃຫ້ຫາຍສາບສູນສາມາດໄຂປົດສະໜາໄດ້ພຽງຈາກການພົບເຫັນຊາກ ສົບທີ່ເຫຼືອຂອງຜູ້ທີ່ຫາຍຕົວໄປເທົ່ານັ້ນ

ໃນກໍລະນີທີ່ທາງການລາວຈະທຳການຄົ້ນຫາຜູ້ທີ່ສູນຫາຍ ຫຼື ວ່າຊາກຊົບຜູ້ທີ່ສູນຫາຍ, ມັນກໍ່ອາດເປັນໄປໄດ້ທີ່ຈະດຳເນີນ ການພິສູດລາຍນິ້ວມື ຫຼື ວ່າ DNA . ຖ້າທາງການລາວຈະດຳເນີນການດັ່ງທີ່ວ່າ, ຢ່າງໜ້ອຍກໍ່ຕ້ອງມີການກະກຽມຄື:

- ເກັບບັນທຶກທຸກລາຍນິ້ວມື ຫຼື ສິ່ງຕ່າງໆ ທີ່ກ່ຽວຂ້ອງ. ບາງຄັ້ງມັນກໍ່ຈຳເປັນທີ່ຕ້ອງໄດ້ຈ້າງຜູ້ທີ່ຊ່ຽວຊານມາດຳເນີນການໃຫ້ ( ໂດຍສະເພາະແມ່ນອົງການຊັ້ນນຳໃນປະເທດອາເມລິກາ ແລະ ບາງອົງການເອກະຊົນ)
- ນຳເອົາເຄື່ອງໃຊ້ສ່ວນຕົວ ແລະ ຈັດລຽງລຳດັບການພິສູດທາງ DNA ຂອງຜູ້ທີ່ສະນິດສະໜົມໃນກໍລະນີທີ່ຈຳເປັນ. ຕິດຕາມເອກະສານການທຳງານ ແລະ ເຄື່ອງໃຊ້ສ່ວນຕົວຂອງທ່ານ ສົມບັດເຊັ່ນ: ໜັງສືຜ່ານແດນ
- ເກັບຕົວຢ່າງທາງສາຍເລືອດ ( ຕົວຢ່າງກ້າມຊີ້ນໃນຜົ້ງແກ້ມ ຫຼື ຕົວຢ່າງຂອງເລືອດ) ຈາກສະມາຊິກຄອບຄົວເຊັ່ນ: ແມ່, ພໍ່, ລູກຫຼານ. ຫຼັງຈາກນັ້ນກໍ່ໃຫ້ເອົາຕົວຢ່າງຂອງ DNA ມາປຽບທຽບໃສ່ກັນເບິ່ງວ່າມີສິ່ງທີ່ເໝືອນກັນແນວໃດ. ການດຳ ເນີນການເຊັ່ນນີ້ແມ່ນຈະຊ່ວຍໃຫ້ໄດ້ຄຳຕອບວ່າຊາກຊົບທີ່ໄດ້ພົບເຫັນນັ້ນແມ່ນຂອງຜູ້ທີ່ຖືກຫາຍສາບສູນຫຼືບໍ່ ( ການດຳ ເນີນງານຄວນຈະເລີ່ມດຳເນີນການແຕ່ດຽວນີ້ໄປເພື່ອກຽມການພິສູດຊາກຊົບທີ່ອາດໄດ້ພົບເຫັນ)
- ໃນກໍລະນີທີ່ໄດ້ພົບເຫັນຊາກຊົບທີ່ຕ້ອງສົງໃສ, ການພິສູດທາງ DNA ກໍ່ຄວນໄດ້ເລີ່ມດຳເນີນການທັນທີໂດຍພິສູດ ຈາກກະ ດູກ, ແຂ້ວ, ກະດູກກົກຂາ ແລະ ອື່ນໆ. ການພິສູດນີ້ແມ່ນມີຄວາມສຳຄັນຫຼາຍ ແລະ ຄວນໃຫ້ຜູ້ທີ່ຊຳນານງານເປັນຜູ້ ດຳເນີນການ. ການເກັບຮັກສາຕົວຢ່າງ DNA ຄວນຈະຮັກສາໄວ້ບໍ່ໃຫ້ມີການປະປົນກັບ DNA ຂອງຜູ້ອື່ນ.

## ການສັນນະສູດຊາກສົບ

ໃນກໍລະນີທີ່ໂຊກຮ້າຍທີ່ໄດ້ພົບເຫັນຜູ້ທີ່ຖືກສູນຫາຍກາເປັນຊາກຊົບໄປແລ້ວ, ການສັນນະສູດກໍ່ຄວນຖືກດຳເນີນໂດຍຜູ້ທີ່ຊຳ ນານທາງພະຍາດວິທະຍາຂອງສາກົນ ແລະ ເປັນໄປຕາມມາດຕະຖານສາກົນເພື່ອພິສູດຫາສະພາບ ແລະ ສາຍເຫດຂອງ ການຕາຍ.

ໂດຍສະເພາະແມ່ນຕ້ອງດຳເນີນໄປຕາມມາດຖານທີ່ກຳນົດໃນອານຸສັນຍາຂອງອົງການສະຫະປະຊາຊາດເພື່ອການສັນນະສູດຊາກສົບວ່າດ້ວຍ ການປ້ອງກັນ ແລະ ການສືບສວນສອບສວນທີ່ມີປະສິດທິພາບໃນການດຳເນີນການ ສະຫຼຸບສຳນວນ ຄະດີ, ການຕັດສິນຄະດີ, ແລະ ການດຳເນີນການທາງກົດໝາຍທີ່ພິເສດ.

## ຂໍ້ມູນທາງດ້ານການເງິນ

ເຈົ້າໜ້າທີ່ທາງການລາວຄວນຈະອອກມາຊີ້ແຈງໃນບັນຫາຂໍ້ມູນທາງດ້ານການເງິນຂອງທ່ານ ສົມບັດວ່າໄດ້ດຳເນີນການ ໄປແນວໃດແລ້ວ.

ຂໍ້ມູນດັ່ງກ່າວສາມາດຊ່ວຍໃນການຄາດຄະເນວ່າທ່າ ສົມບັດອາດຍັງມີຊີວິດຢູ່ຫຼືບໍ່ (ການພິສູດການມີຊີວິດ), ການກວດສອບ ແມ່ນຄວນຄົ້ນຫາວ່າສະພາບທາງດ້ານການເງິນຂອງທ່ານ ສົມບັດຍັງຖືກເຄື່ອນໄຫວຢູ່ ຫຼືບໍ່ ພາຍຫຼັງວັນທີ 15 ທັນວາ 2012, ແລ້ວນຳເອົາຂໍ້ມູນ ມາທຽບເບິ່ງກັບການເຄື່ອນໄຫວທາງການເງິນໃນເມື່ອກ່ອນ.

ຂໍ້ມູນທາງການເງິນຍັງສາມາດຊ່ວຍໃຫ້ເກີດມີຄຳຖາມຫຼາຍຢ່າງຕາມມາ, ໂດຍສະເພາະແມ່ນການເຮັດທຸລະກຳທາງການ ເງິນເພາະມີພຽງແຕ່ເຈົ້າຂອງບັນຊີເທົ່ານັ້ນທີ່ສາມາດເຮັດໄດ້, ແຕ່ຖ້າຫາກ ຍັງມີການເຄື່ອນໄຫວຢູ່ນັ້ນກໍ່ຖືວ່າຈະມີຜົນດີ ໃນການຕິດຕາມຫາ ທ່ານ ສົມບັດໄດ້.

ນອກຈາກນີ້ກໍຄວນເບິ່ງຂໍ້ມູນການເຄື່ອນໄຫວທາງການເງິນປຽບທຽບກັບ ຂໍ້ມູນການເຂົ້າເວັບທາງໂທລະສັບ ເພາະວ່າການເຄື່ອນໄຫວນັ້ນອາດແມ່ນຜູ້ທີ່ຕ້ອງສົງໃສທີ່ໄດ້ຮູ້ຂໍ້ມູນ ຫຼື ລະຫັດຂອງທ່ານ ສົມບັດ ມາກ່ອນການຖືກລັກພາຕົວ.

**ຄຳສອບຖາມສະເພາະທີ່ຄວນດຳເນີນການຄື:**

- ສອບຖາມນຳສະຖາບັນການເງິນບ່ອນທີ່ທ່ານ ສົມບັດມີບັນຊີເງິນຝາກ ຫຼື ມີບັດເຄຣດິດ
- ບັນຊີເງິນບ່ອນທີ່ມີການເຄື່ອນໄຫວລາຍຮັບລາຍຈ່າຍ
- ຄົ້ນຫາຂໍ້ມູນທາງການເງິນຢູ່ທີ່ໂຕະເຮັດວຽກ ແລະ ໃນບ້ານເພາະບາງຄັ້ງອາດມີເອກະສານທີ່ກ່ຽວຂ້ອງນັ້ນມັຽນໄວ້ຢູ່
- ຕັ້ງແຕ່ມີການຫາຍສາບສູນສິ່ງທີ່ຄວນປະຕິບັດກໍ່ຄືການກວດສອບລາຍຮັບລາຍຈ່າຍທີ່ເກີດຂຶ້ນທີ່ບໍ່ໄດ້ເປີດເຜີຍຢູ່ໃນບ້ານ ແລະ ຫ້ອງການ
- ສຳພາດພັນລະຍາ Ng Shui Meng ກ່ຽວກັບຂໍ້ມູນທາງການເງິນຂອງ ທ່ານສົມບັດ
- ກວດສອບທຸກພິໃນກຳ ແລະ ທະນາຍທີ່ເປັນຕົວແທນ
- ກວດສອບໜີ້ສິນທີ່ຕ້ອງມີການຊຳລະຄືນເຊັ່ນ: ຄ່າພ່ອນລົດ
- ກວດສອບຊັບສິນທີ່ທ່ານ ສົມບັດມີຄວາມຮັບພິຊອບຢູ່ເຊັ່ນ: ໂທລະສັບມືຖື ແລະ ໂທລະສັບຕັ້ງໂຕະ, ແລະ ອິນເຕີເນັດ. ຖ້າຫາກວ່າລາຍ ການເຫລົ່ານີ້ຍັງມີການຊຳລະຄ່າບໍລິການຢູ່ກໍ່ແມ່ນໃຫ້ກວດສອບເບິ່ງວ່າຍັງມີບັນຊີໃດອີກບໍ່ທີ່ກ່ຽວຂ້ອງ ກັບການຊຳລະດັ່ງກ່າວ
- ກວດສອບເບິ່ງລາຍລະອຽດການເຮັດສັນຍາກູ້ຢືມ ແລະ ມີການມັດຈຳໃດໆບໍ່ເພື່ອຈະໄດ້ຄົ້ນຫາບັນຊີການເງິນທີ່ກ່ຽວຂ້ອງ
- ກວດສອບເບິ່ງອີເມວທີ່ອາດມີຂໍ້ມູນທາງການເງິນໃນນັ້ນ
- ກວດເບິ່ງຂໍ້ຄວາມທາງໂທລະສັບທີ່ອາດຈະມີເຄື່ອນໄຫວທາງການເງິນຢູ່

## ຍຸດທະສາດທາງການເງິນທີ່ໜ້າສົງໄສ

ກວດສອບເບິ່ງທຸກການໃຊ້ຈ່າຍທີ່ໜ້າສົງໄສວ່າມີຫຼັກຖານທີ່ກ່ຽວຂ້ອງກັບການໃຊ້ຈ່າຍທີ່ບໍ່ເປັນທາງການ ຫຼື ການໃຊ້ຈ່າຍ ເພື່ອຄວາມບັນເທີງທົ່ວໆໄປບໍ່.

ກວດສອບຄວາມເປັນໄປໄດ້ທີ່ກ່ຽວກັບລາຍຈ່າຍນອກລະບົບທີ່ເກີດຂຶ້ນແລະອາດກ່ຽວຂ້ອງກັບການສໍ້ໂກງເງິນທີ່ໄປແຕະ ຕ້ອງສິດ ແລະ ຜົນປະໂຫຍດຂອງຜູ້ທີ່ອອກຄຳສັ່ງໃຫ້ລັກພາຕົວ

## ຍຸດທະສາດການປົກປ້ອງ ແລະ ຄົ້ນຫາພະຍານ

ຍຸດທະສາດການປົກປ້ອງ ແລະ ຄົ້ນຫາພະຍານຄວນຈະພິຈາລະນາໃນຫຼາຍດ້ານທີ່ຈະເປັນຜົນດີໃຫ້ແກ່ການການສືບສວນ ສອບສວນທີ່ຈະໄດ້ຂໍ້ມູນຈິງ ແລະ ເຮັດໃຫ້ພະຍານກ້າເວົ້າໃນສິ່ງທີ່ຫຼົ່ແຫຼມໂດຍມີມາດຕະການທີ່ຈະໃຫ້ການປົກປ້ອງເຂົາເຈົ້າ ເຫລົ່ານັ້ນໄປພ້ອມກັນ.

**ຈຸດປະສົງໃນການສອບຖາມກໍ່ແມ່ນເພື່ອ:**

- ຄົ້ນຫາຄວາມຈິງ
- ກະຕຸ້ນໃຫ້ຜູ້ທີ່ຮູ້ເຫັນເຫດການໄດ້ເວົ້າໃນສິ່ງທີ່ຢາກເວົ້າ
- ແຍກຫຼັກຖານຂໍ້ມູນໃສ່ຜູ້ທີ່ມີສ່ວນກ່ຽວຂ້ອງ
- ຄົ້ນຫາພະຍານຕົວຈິງ
- ຄົ້ນຫາຜູ້ຕ້ອງສົງໃສຕົວຈິງ

ທາງການລາວຄວນອອກມາໃຫ້ຄວາມເຫັນວ່າໄດ້ດຳເນີນການໄປແນວໃດແນ່ແລ້ວກ່ຽວກັບການຄົ້ນຫາ ແລະ ສອບຖາມ ພະຍານທີ່ກ່ຽວຂ້ອງຄື:

- ປະກາດຫາຕາມກະດານຂ່າວ
- ແຈກໃບປິວ
- ກວດຖາມບ້ານຕໍ່ບ້ານລວມທັງບັນດາຫ້າງຮ້ານທຸລະກິດຕ່າງໆແຖວໆບ້ານ
- ສອບຖາມຜູ້ທີ່ສາມາດເດີນທາງເຂົ້າອອກປ້ອມຕຳຫຼວດດັ່ງກ່າວໄດ້
- ທົບທວນເຫດການຄືນໃໝ່

## ບູລິມະສິດທີ່ຮີບດ່ວນ

ສັງຄົມໄດ້ຮັບຮູ້ບັນຫານີ້ຫຼາຍປານໃດແລ້ວວ່າທາງການລາວໄດ້ທຳການຄົ້ນຫາບັນດາພະຍານທີ່ສຳຄັນ.

ພະຍານທີ່ສຳຄັນນີ້ຄວນຄົ້ນຫາຜູ້ທີ່ເຫັນເຫດການໂດຍກົງ ຫຼື ຜູ້ທີ່ໄດ້ເຂົ້າຮ່ວມໃນການສືບສວນສອບສວນໃນບັນຫາການ ລັກພາຕົວທ່ານສົມບັດສົມພອນ.

ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນປ້ອມຕຳຫຼວດ, ບຸກຄົນອື່ນທີ່ເຫັນເຫດການໃນເວລາດັ່ງກ່າວ, ແລະ ທ່ານນາງ Ng Shui Meng ກໍ່ແມ່ນເປັນພະຍານໃນຕົວ

**ຄຳໃຫ້ການທີ່ຕ້ອງການຈາກເຈົ້າໜ້າທີ່ຕຳຫຼວດທີ່ປະຕິບັດໜ້າທີ່ໃນປ້ອມຕຳຫຼວດໃນວັນທີ 15 ທັນວາ 2012ຄື:**

- ຈຸດປະສົງຂອງປ້ອມຕຳຫຼວດ
- ໂຄງຮ່າງການຈັດຕັ້ງຂອງເຈົ້າໜ້າທີ່ປະຈຳການທີ່ປ້ອມຕຳຫຼວດ
- ຄຳສັ່ງ ຫຼື ຄຳແນະນຳທີ່ໄດ້ຮັບ
- ຊົ່ວໂມງປະຈຳການ
- ພະຍານທີ່ສາມາດບອກຊື່ຂອງເຈົ້າໜ້າທີ່ທີ່ປະຈຳການວັນນັ້ນ
- ບັນດາເອກະສານທີ່ກ່ຽວຂ້ອງກັບການປະຈຳການເຊັ່ນ: ຕາຕະລາງປະຈຳການ, ປື້ມບັນທຶກການປະຈຳການ ແລະ ປື້ມບັນ ທຶກທົ່ວໄປ
- ວິທີການຕ່າງໆທີ່ໃຊ້ບັນທຶກເຫດການທີ່ປ້ອມຕຳຫຼວດ ( ການຖ່າຍພາບ ແລະ ໃຊ້ກ້ອງວົງຈອນປິດອື່ນໆ)
- ວິທີການສື່ສານໃນປ້ອມ
- ລາຍລະອຽດຂໍ້ມູນທາງໂທລະສັບຂອງຜູ້ທີ່ປະຈຳການວັນນັ້ນ
- ລາຍລະອຽດຂອງພາຫະນະທີ່ກ່ຽວຂ້ອງໃນວັນນັ້ນ
- ທຸກຂໍ້ມູນທີ່ເຫັນວ່າກ່ຽວຂ້ອງກັບການຫາຍຕົວໄປຂອງທ່ານ ສົມບັດຢູ່ທີ່ປ້ອມຕຳຫຼວດ

ນອກນັ້ນກໍ່ຄວນສອບຖາມບັນດາຜູ້ທີ່ເຂົ້າຮ່ວມໃນກອງປະຊຸມ AEFP ພາກປະຊາຄົມ ອາຊີ-ປາຊີຟິກທີ່ຈັດຂຶ້ນໃນເດືອນຕຸລາ 2012 ວ່າໃນວັນນັ້ນໄດ້ເຫັນການຕິດຕາມສອດແນມຈາກທາງການລາວບໍ່.

## ການທົບທວນເຫດການຄືນ

ການທົບທວນເຫດການຄືນໃນເຫດການການລັກພາຕົວນັ້ນແມ່ນຈະເຮັດໃຫ້ສັງຄົມມີຄວາມຕື່ນຕົວສູງໃນການຄົ້ນຫາຄວາມ ເປັນຈິງ. ການທົວທວນຄືນເຫດການນັ້ນຄວນຈະດຳເນີນຕໍ່ເນື່ອງ ຫຼືວ່າພາຍຫຼັງວັນຄົບຮອບຂອງເຫດການມາເຖິງໄດ້ສອງ ປີຄື ວັນທີ15 ທັນວາ 2014.

## ການສອບຖາມບ້ານຕໍ່ບ້ານທີ່ຢູ່ບໍລິເວັນໃກ້ຄຽງກັບສະຖານທີ່ເກີດເຫດ

ທາງການລາວຄວນສ້າງຄວາມກະຈ່າງແຈ້ງວ່າໄດ້ດຳເນີນການແນວໃດແນ່ແລ້ວໃນການສອບຖາມຜູ້ທີ່ອາດເຫັນເຫດການທີ່ບໍລິເວັນໃກ້ຄຽງກັບບ່ອນທີ່ທ່ານ ສົມບັດສົມພອນ ຖືກລັກພາຕົວ.

ວັດຖຸປະສົງໃນການສອບຖາມບ້ານຕໍ່ບ້ານ (ຮ້ານຄ້າຕໍ່ຮ້ານຄ້າ)ແມ່ນມີຢູ່ 4 ຈຸດປະສົງຫຼັກຄື:

- ຊອກຫາຜູ້ຕ້ອງສົງໄສ
- ຊອກຫາພະຍານ
- ຮວບລວມຂໍ້ມູນໃນລະດັບທ້ອງຖິ່ນ ແລະ ຈາກໜ່ວຍງານລັບ
- ກະຕຸ້ນຄວາມຕື່ນຕົວໃນສັງຄົມ

**ການສອບຖາມບ້ານຕໍ່ບ້ານແມ່ນມີຄວາມເປັນໄປໄດ້ທີ່ຈະຄົ້ນຫາພະຍານທີ່ຢູ່ ແລະ ເຮັດວຽກໃກ້ຄຽງກັບບ່ອນເກີດເຫດ.**

**ພະຍານທີ່ວ່ານີ້ແມ່ນ:**

- ຜູ້ທີ່ເຫັນເຫດການໃນວັນທີ 15 ທັນວາ 2012
- ຜູ້ທີ່ເຫັນຜູ້ກະທຳຜິດ ຫຼື ເຫັນທ່ານ ສົມບັດ ສົມພອນ ກ່ອນ ແລະ ຫຼັງເກີດເຫດ
- ຜູ້ທີ່ເຫັນພາຫະນະທີ່ກ່ຽວຂ້ອງ
- ຜູ້ທີ່ເຫັນບຸກຄົນອື່ນໆທີ່ເຫັນເຫດການນຳກັນ

## ການອອກທາງສື່ມວນຊົນ

ທາງການລາວຄວນສ້າງຄວາມຈະແຈ້ງຕໍ່ສັງຄົມວ່າໄດ້ດຳເນີນການແນວໃດແລ້ວໃນການສະເໜີໃຫ້ສື່ມວນຊົນອອກຂ່າວ ເພື່ອຄົ້ນຫາຄວາມຈິງກ່ຽວກັບການຫາຍຕົວໄປຂອງທ່ານ ສົມບັດສົມພອນ.

ຈຸດປະສົງຂອງການອອກທາງສື່ມວນຊົນແມ່ນເພື່ອຄົ້ນຫາຕົວບຸກຄົນ ແລະ ສະຖານທີ່ທີ່ອາດມີວັດຖຸໃດໜຶ່ງທີ່ສາມາດນຳມາ ສືບສວນສອບສວນໄດ້ເຊັ່ນ:

- ພະຍານທີ່ເຫັນເຫດການແຕ່ທຳອິດ ໃນວັນທີ 15 ທັນວາ 2012
- ຂໍ້ມູນສະຖານທີ່ບ່ອນທີ່ມີການລັກພາຕົວ ແລະ ບ່ອນຊຸກເຊື່ອງທ່ານ ສົມບັດສົມພອນ
- ຂໍ້ມູນກ່ຽວກັບສະພາບຄວາມເປັນຢູ່ຂອງທ່ານ ສົມບັດສົມພອນຕັ້ງແຕ່ທ່ານຖືກລັກພາຕົວໄປ
- ຂໍ້ມູນໃນດ້ານການດຳລົງຊີວິດ, ການເຄື່ອນໄຫວ, ແລະ ນິໄສໃຈຄໍຂອງທ່ານ ສົມບັດສົມພອນ
- ຂໍ້ມູນທີ່ກ່ຽວຂ້ອງທີ່ທ່ານ ສົມບັດສົມພອນອາດໄດ້ບອກໃຫ້ຜູ້ໃດໜຶ່ງຮັບຮູ້ນຳກ່ຽວກັບຄວາມກັງວົນດ້ານຄວາມປອດໄພຂອງ ຜູ້ກ່ຽວ

ການຕາມຫາທາງສື່ນັ້ນອາດໄດ້ຂໍ້ມູນການສົນທະນາແບບປິດລັບຂອງທ່ານ ສົມບັດກັບສາຍໂທດ່ວນທີ່ຜູ້ກ່ຽວອາດໄດ້ລະ ບາຍບາງ ຢ່າງໃນນັ້ນກໍ່ເປັນໄດ້. ການສົນທະນານັ້ນແມ່ນມີທັງຜ່ານທາງໂທລະສັບ, ອີເມວ, ແລະ ຜ່ານທາງສື່ອອນລາຍ.

ນອກນັ້ນຍັງອາດໄດ້ຂໍ້ມູນການພົບເຫັນລົດຂອງທ່ານ ສົມບັດສົມພອນ. ຖ້າໄດ້ມີການພົບເຫັນລົດທີ່ວ່ານັ້ນມັນກໍ່ຈະເປັນການດີ ແກ່ການດໍາເນີນການຕໍ່ໄປ.

ການຕາມຫາທາງສີ່ແມ່ນຄວນຕັ້ງລາງວັນໃຫ້ແກ່ຜູ້ທີ່ອາດມີຂໍ້ມູນກ່ຽວກັບທ່ານ ສົມບັດສົມພອນ ແລະ ຕ້ອງໃຫ້ການຮັບປະ ກັນວ່າລາງວັນມີແທ້ຈິງ.

ມາດຕາ 12 ຂອງສົນທິສັນຍາວ່າການປ້ອງກັນ ແລະ ສະກັດກັ້ນການຖືກບັງຄັບໃຫ້ຫາຍສາບສູນໄດ້ກໍານົດສິດຂອງພະຍານ ແລະ ຜູ້ທີ່ຖືກເຄາະຮ້າຍຄື:

## ມາດຕາ 12

1. ລັດພາຄີທຸກລັດຕ້ອງໃຫ້ຫຼັກປະກັນຜູ້ທີ່ສາມາດໃຫ້ຂໍ້ມູນວ່າຈະມີຄົນຖືກບັງຄັບໃຫ້ຫານສາບສູນມີສິດທີ່ຈະນໍາເລື່ອງໄປລາຍ ງານໃຫ້ເຈົ້າໜ້າທີ່ທີ່ຮັບຜິຊອບນັ້ນໄດ້ ເພື່ອຈະດໍາເນີນການທັນທີ ແລະ ບໍ່ລໍາອຽງ, ໃນກໍລະນີທີ່ຄິຈໍາເປັນ ກໍ່ແມ່ນຕ້ອງໄດ້ ດໍາເນີນການສືບສວນສອບສວນໃຫ້ໄວທີ່ສຸດດ້ວຍຄວາມເປັນກາງ ແລະ ຕໍ່ເນື່ອງ. ນໍາໃຊ້ມາດຕະການທີ່ເໝາະສົມໃນ ກໍລະນີຈໍາເປັນເພື່ອຮັບປະກັນການປົກປ້ອງຜູ້ລາຍງານຂໍ້ມູນ, ພະຍານ, ຍາດທີ່ພີ່ນ້ອງຂອງຜູ້ທີ່ຫາຍສາບສູນ, ຕົວແທນ ຂອງຜູ້ຖືກເຄາະຮ້າຍ, ແລະ ຜູ້ທີ່ມີສ່ວນກ່ຽວພັນກັນການສືບສວນສອບສວນໃນຄະດີວ່າຈະບໍ່ມີໄພອັນຕະລາຍໃດໆເກີດ ກັບພວກເຂົາ.

ທາງການລາວຕ້ອງໃຫ້ການຮັບປະກັນຍຸດທະສາດ, ຫງົບປະມານ ແລະ ບຸກຂະລາກອນໃຫ້ພຽງພໍເພື່ອຮັບປະກັນ ແລະ ນໍາໃຊ້ເຂົ້າໃນມາດຕະການປົກປ້ອງພະຍານທຸກຄົນ.

**ມາດຕະການການປົກປ້ອງແມ່ນຂຶ້ນຢູ່ກັບສະຖານະການຄື:**

- ໃຫ້ການປົກປ້ອງຂໍ້ມູນສ່ວນຕົວຂອງພະຍານ ແລະ ໃຫ້ສິດທີ່ຈະຕໍ່ສູ້ເພື່ອຄວາມເປັນທໍາພາຍໄຕ້ມາດຕະຖານການດໍາ ເນີນຄະດີທີ່ເປັນທໍາຂອງສາກົນ.
- ໃຫ້ການແຈ້ງເຕືອນເປັນສ່ວນຕົວ
- ນໍາໃຊ້ມາດຕະການອື່ນໆໃນການປົກປ້ອງສະພາບທາງດ້ານຮ່າງກາຍ ແລະ ຈິດໃຈ
- ໃຫ້ປົກປ້ອງດ້ວຍການຍ້າຍທີ່ຢູ່ອາໃສ

## ການລຽງລໍາດັບເຫດການ

ຕາມຂໍ້ມູນທີ່ໄດ້ເກັບລວບລວມມາຈາກຫຼາຍແຫ່ງ, ດັ່ງນັ້ນທາງການລາວຄວນທໍາການຈັດລຽງລໍາດັບຄວາມສໍາຄັນຂອງ ບັນຫາ.

ການຈັດລຽງລໍາດັບຄວນຈະເລີ່ມຈາກ:

- ຄໍາເວົ້າຂອງພະຍານ
- ການເຄື່ອນໄຫວຂອງທ່ານສົມພອນ ເທົ່າທີ່ຮູ້ຈັກ
- ການເຄື່ອນໄຫວຂອງຜູ້ຕ້ອງສົງໃສເທົ່າທີ່ຮູ້ຈັກ
- ຂໍ້ມູນທາງການສື່ສານ ແລະ ການໃຊ້ໂທລະສັບຕ່າງໆ
- ເອກະສານຕ່າງໆລວມມີບົດລາຍງານຂອງຕໍາຫຼວດ, ບົດບັນທຶກເລື່ອງລາວທີ່ເກີດ, ແລະ ອື່ນໆ
- ຂໍ້ມູນການເຂົ້າເວັບໄຊ້ທາງໂທລະສັບ
- ຂໍ້ມູນການເຮັດທຸລະກໍາທາງການເງິນ
- ຮູບພາບ ແລະ ພາບຖ່າຍຈາກກ້ອງວົງຈອນປິດ
- ຂໍ້ມູນຮູບແບບການໃຊ້ຊີວິດຂອງທ່ານ ສົມບັດ

ການຈັດລຽງລໍາດັບຂໍ້ມູນນີ້ຈະສາມາດຊ່ວຍໃຫ້ມີຄວາມເຂົ້າໃຈໃນບັນຫາທີ່ເກີດຂຶ້ນທັງໝົດ, ຊ່ວຍໃນການໄຈ້ແຍກເລື່ອງ ລາວທີ່ຮັບຮູ້ກັນ ແລະ ສາມາດໃຫ້ຄວາມຮູ້ໃໝ່ໆກ່ຽວກັບບັນຫາ.

## ການຊ່ວຍເຫຼືອທາງດ້ານເຕັກນິກ

ທາງການລາວຄວນຈະພິຈາລະນາຊອກຫາການຊ່ວຍເຫຼືອນຳອົງການທາງກົດໝາຍທີ່ມີຄວາມຊຳນານດ້ານເທັກນິກ ຂອງຄະດີ. ຕາມທີ່ເຫັນກັນກໍ່ຄືວ່າຍັງບໍ່ໄດ້ມີການສືບສວນສອບສວນຢ່າງຈິງຈັງພໍປານໃດ. ມີຫຼາຍໆອົງການທີ່ມີຄວາມ ຊຳນານທາງເທັກນິກທີ່ສາມາດຊ່ວຍໄດ້ຖ້າຫາກມີການຮ້ອງຂໍນຳເຂົາເຈົ້າເຊັ່ນ: ສະນັກງານເພື່ອການສືບສວນສອບ ສວນຂອງສະຫະລັດອາເມລິກາ, ອົງການຕຳຫຼວດແຫ່ງສະພັນທະລັດ ແລະ ໜ່ວຍງານຕ້ານ ແລະ ສະກັດກັ້ນການກໍ່ ການຮ້າຍຂອງອອສເຕຣເລຍ, ອົງການນິວສະກອດແລນຢາດ, ແລະ ອົງການສືບສວນສອບສວນແຫ່ງນະຄອນລອນດອນ ກໍ່ແມ່ນມີຄວາມ ສາມາດທີ່ຈະຊ່ວຍໄດ້ເຊັ່ນ:

- ຊ່ວຍການທົດສອບທາງນິຕິວິທະຍາໃນບ່ອນທີ່ເກີດເຫດ, ພາຫະນະ, ແລະ ຊາກຊົບທີ່ພົບເຫັນ
- ຊ່ວຍໃນການວິເຄາະຫາຂໍ້ມູນທາງໂທລະສັບ ແລະ ສະຖານທີ່ທີ່ໄດ້ໃຊ້ໂທລະສັບ
- ຊ່ວຍຮັກສາ ແລະ ວິເຄາະຂໍ້ມູນໃນກ້ອງວົງຈອນປິດ

## ຕຳຫຼວດສາກົນ

ສປປ ລາວ ເປັນໜຶ່ງໃນສະມາຊິກຂອງຕຳຫຼວດສາກົນຕັ້ງແຕ່ປີ 1956. ສຳນັກງານຕຳຫຼວດສາກົນປະຈຳສປປ ລາວ ແມ່ນຕັ້ງຢູ່ນະຄອນຫຼວງວຽງຈັນ, ມີພະນັກງານປະມານ 20 ຄົນ ແລະ ບໍ່ໄດຂື້ນກັບທາງຕຳຫຼວດພາຍໃນຂອງລາວ.

ປະຈຸບັນຕຳຫຼວດສາກົນໄດ້ໝາຍຊື່ຂອງທ່ານ ສົມບັດ ສົມພອນເປັນສີເຫຼືອງວ່າທ່ານເປັນຜູ້ທີ່ຖືກຫາຍສາບສູນ

ໃນຂະນະດຽວກັນ ສປປ ລາວ ກໍ່ມີຊາຍແດນຕິດຈອດກັບຫຼາຍປະເທດຄື: ສປປ ຈີນ, ສສ ວຽດນາມ, ກຳປູເຈຍ, ແລະ ລາດສະອານາຈັກໄທ, ດັ່ງນັ້ນສິ່ງທີ່ດີກໍ່ແມ່ນຄວນໃຫ້ການຮ່ວມມືກັບຕຳຫຼວດສາກົນທີ່ປະຈຳໃນແຕ່ລະປະເທດນັ້ນໃນ ການຕາມຫາ ທ່ານ ສົມບັດສົມພອນ.

## ທົບທວນການສືບສວນສອບສວນ

ເຈົ້າໜ້າທີ່ທາງການລາວຄວນຈະພິຈາລະນາຢ່າງຖີ່ຖ້ວນວ່າຈະໃຫ້ເຈົ້າໜ້າທີ່ ຫຼື ຜູ້ຊ່ຽວຊານທີ່ມີຄວາມສາມາດ ແລະ ເປັນອິດສະຫລະດຳເນີນການທົບທວນຄືນດ້ານຂອບເຂດ, ຍຸດທະວິທີ, ແລະ ຜົນຂອງການສືບສວນສອບສວນທີ່ໄດ້ເຮັດ ຜ່ານມາ.

ຖ້າເຫັນດີກໍ່ແມ່ນຕ້ອງໄດ້ມີການຮ່ວມມືກັນເພື່ອຈະດຳເນີນການທົບທວນຢ່າງເຕັມທີ່ໃນການເຂົ້າຫາທຸກຂໍ້ມູນ ແລະ ສຳນວນ ຂອງຄະດີ.

ວັດຖຸປະສົງຂອງການທົບທວນນີ້ກໍ່ເພື່ອທຳການປະເມີນຜົນທີ່ໄດ້ຈາກການສືບສວນສອບສວນທີ່ຜ່ານມາມາຢ່າງຮອບດ້ານ ເພື່ອທີ່ຈະຮັບປະກັນ:

- ການດຳເນີນການທີ່ຜ່ານມາແມ່ນໄດ້ໄປຕາມຈຸດປະສົງແລ້ວ ຫຼື ບໍ່
- ການດຳເນີນການທີ່ຜ່ານມາແມ່ນໄດໄປຕາມມາດຕະຖານສາກົນ ແລະ ພາຍໃນ ຫຼືບໍ່
- ການດຳເນີນການທີ່ຜ່ານມາແມ່ນໄດ້ດຳເນີນໄປຢ່າງຕໍ່ເນື່ອງ ຫຼືບໍ່, ມີອິດສະຫລະ ແລະ ເປັນກາງ ຫຼືບໍ່, ມີປະສິດທິຜົນ ແລະ ບໍ່ໄດ້ມີຄວາມຈຳແນກໃດໆ ຫຼືບໍ່
- ການດຳເນີນການທີ່ຜ່ານມາແມ່ນໄດ້ເຊື່ອມໂຍງ ແລະ ໄປຕາມເປົ້າໝາຍ ຫຼືບໍ່
- ການດຳເນີນການທີ່ຜ່ານມາແມ່ນບໍ່ໄດ້ເບິ່ງຜ່ານບັນຫາໃດໜຶ່ງ ຫຼືບໍ່
- ການດຳເນີນການທີ່ຜ່ານມາແມ່ນໄດ້ປະເມີນວ່າໄດ້ຮັບຜົນດີ ຫຼືບໍ່

ການຕັ້ງບັນທັດຖານຂ້າງເທິງນີ້ກໍ່ແມ່ນເປັນພື້ນຖານຂອງຄວາມຕ້ອງການທີ່ຈະນຳໃຊ້ເຂົ້າໃນການທົບທວນທີ່ຈະມີການຮ່ວມມືກັນລະຫວ່າງເຈົ້າໜ້າທີ່ທາງການລາວ ແລະ ໜ່ວຍງານທົບທວນຄືນຄະດີ. ລັດຖະບານລາວຄວນໃຫ້ການເຄົາລົບນັບຖື ແລະ ຕ້ອງໃຫ້ການຊ່ວຍເຫຼືອການດຳເນີນງານທີ່ຈະເກີດຂື້ນ.

ການທົບທວນຕ້ອງເປັນອິດສະຫລະ, ເປັນກາງ, ແລະ ໄລຍະເວລາທີ່ຈະນໍາໃຊ້, ພ້ອມທັງໃຫ້ຄໍາອະທິ ບາຍຢ່າງຊັດເຈນວ່າ ຜົນທີ່ໄດ້ຮັບນັ້ນຄວນເປີດເຜີຍໃຫ້ໃຜເຫັນແດ່.

ຜູ້ທີ່ຈະມາດໍາເນີນການທົບທວນການສືບສວນສອບສວນນັ້ນຕ້ອງແມ່ນຜູ້ທີ່ມີຄວາມສາມາດ ແລະ ມີປະສົບການໃນການສືບສວນສອບສວນທາງອາຍາທີ່ມີລັກສະນະສັບຊ້ອນໃນຄະດີລະດັບສາກົນ.

ການດໍາເນີນການສືບສວນສອບສວນທີ່ມີອິດສະຫລະນັ້ນແມ່ນຕ້ອງການຊັບພະຍາກອນທາງດ້ານວັດຖຸ ແລະ ບຸກຄະລາ ກອນທີ່ມີປະສິດທິພາບ ແລະ ພຽງພໍ. ການດໍາເນີນງານຕ້ອງດໍາເນີນໄປໃນສະຖານທີ່ທີ່ບໍ່ແມ່ນບ່ອນທີ່ເຄີຍດໍາເນີນການ ມາກ່ອນ–ຖ້າສາມາດປະຕິບັດໄດ້. ເຫດຜົນກໍ່ຍ້ອນວ່າເພື່ອເປັນການຫຼີກເວັ້ນການເຊື່ອມໂຍງຜົນທີ່ເຄີຍຮູ້ຈັກທີ່ໄດ້ຈາກ ການດໍາເນີນງານຄັ້ງທີ່ຜ່ານມາ.

ພະນັກງານທີ່ດໍາເນີນການທົບທວນນັ້ນຕ້ອງໄດ້ຮັບການຕອບສະໜອງທາງດ້ານຂໍ້ມູນຄື: ເອກະສານກ໊ອບປີ້ຈາກຖານຂໍ້ມູນ, ຂໍ້ມູນການລຽງລໍາດັບເຫດການ, ຄໍາຖະແຫຼງຈາກພະຍານຕ່າງໆທີ່ສໍາຄັນ ແລະ ຕາຕະລາງການໃຫ້ປາກຄໍາ, ບົດບັນ ທຶກເຫດການ ແລະ ບົດລາຍງານຄວາມຄືບໜ້າໃນປະຈຸບັນ. ສິ່ງທີ່ກ່າວມານີ້ແມ່ນສາ ມາດເຮັດໃຫ້ຜູ້ທີ່ຈະມາດໍາເນີນການ ທົບທວນນັ້ນມີຄວາມພ້ອມກ່ອນທີ່ຈະລົງມື.

ຍຸດທະວິທີທີ່ຈະນໍາໄປໃຊ້ຈາກທີມງານສືບສວນສອບສວນນັ້ນຕ້ອງໄດ້ຮັບພິຈາລະນາເປັນຢ່າງດີໂດຍສະເພາະໃນເລື່ອງທີ່ກ່ຽວຂ້ອງກັບຜູ້ທີ່ຕ້ອງສົງໃສທີ່ສໍາຄັນ, ຄຸນນະວຸດທິຂອງບຸກຄະລາກອນ, ຄໍາຖະແຫລງ, ການເປີດເຜີຍຂໍ້ມູນ, ການອອກສື່, ບຸກຄົນ ແລະ ພາຫະນະທີ່ບໍ່ທັນໄດ້ພົບເຫັນ, ການສອບຖາມບ້ານຕໍ່ບ້ານ ແລະ ການດໍາເນີນການຄົ້ນຫາຂໍ້ມູນຕໍ່ໄປ.

ທີມງານທົບທວນຄະດີກໍ່ໄດ້ຮັບຄໍາແນະນໍາກ່ຽວກັບຍຸດທະສາດທາງດ້ານເທັກນິກ ແລະ ທາງນິຕິວິທະຍາໄປນໍາ.

## ເອກະສານຊ້ອນທ້າຍ 1– ຄໍາແນະນໍາທີ່ສໍາຄັນສໍາລັບເຈົ້າໜ້າທີ່ຂອງລາວ

ອີງຕາມສົມມຸດຕິຖານທີ່ຕັ້ງຂື້ນວ່າທ່ານ ສົມບັດສົມພອນໄດ້ຖືກບັງຄັບໃຫ້ຫາຍສາບສູນນັ້ນ, ບັນດາຄໍາແນະນໍາທີ່ຂຽນຢູ່ລຸ່ມນີ້ ແມ່ນຖືກສ້າງຂື້ນມາສໍາລັບເຈົ້າໜ້າທີ່ລາວເພື່ອຈະນໍາໄປຈັດຕັ້ງປະຕິບັດຕໍ່ໄປ:

**ຄໍາແນະນໍາທີ 1**

ສ້າງແຜນຍຸດທະສາດລວມຂອງແນວທາງໃນການຈັດຕັ້ງປະຕິບັດເພື່ອການສືບສວນສອບສວນ

**ຄໍາແນະນໍາທີ 2**

ຕໍາຫຼວດສືບສວນສອບສວນຄວນຈະເປີດເບິ່ງຖານຂໍ້ມູນພ້ອມທັງບັນທຶກເອົາທຸກ (ກ) ຂັ້ນຕອນການດໍາເນີນງານ ແລະ ການສືບສວນສອບສວນ (ຂ) ເພື່ອດໍາເນີນການກວດສອບເບິ່ງຄວາມຖືກຕ້ອງຂອງການດໍາເນີນງານ. ຖານຂໍ້ມູນ ກໍ່ຄວນອານຸຍາດໃຫ້ເຈົ້າໜ້າທີ່, ທຸກອົງກອນສອບສວນອິດສະຫລະ, ແລະ ຄອບຄົວຂອງທ່ານ ສົມບັດ ສົມພອນ ຫຼື ຍາດທີ່ພີ່ນ້ອງເຂົ້າກວດສອບ ແລະ ທົບທວນຄືນໄດ້.

**ຄໍາແນະນໍາທີ 3**

ຕໍາຫຼວດສືບສວນສອບສວນຕ້ອງຮັບປະກັນການນໍາໃຊ້ລະບົບການບໍລິຫານຈັດການໃຫ້ມີປະສິດທິພາບໃນການເກັບລວບລວມ,ເກັບຮັກສາຢ່າງມີຄວາມຮັບປະກັນ ແລະ ປອດໄພ, ແລະ ມີການວິເຄາະຂໍ້ມູນທຸກຢ່າງທີ່ໄດ້ຈາກການສືບສວນສອບສວນ.

**ຄໍາແນະນໍາທີ 4**

ສ້າງຍຸດທະສາດສະເພາະເພື່ອປະສານງານຮ່ວມມືກັບຄອບຄົວຜູ້ຖືກເຄາະຮ້າຍເພື່ອຮັບປະກັນສິດທີ່ຈະໄດ້ຮັບຂໍ້ມູນຂ່າວ ສານຢ່າງເປັນປົກກະຕິກ່ຽວກັບຄວາມຄືບໜ້າ ແລະ ໄດ້ຮັບຜົນຈາກການສືບສວນສອບສວນທີ່ໄດ້ຖືກດໍາເນີນໄປຢ່າງມີ ຄຸນນະພາບ.

**ຄໍາແນະນໍາທີ 5**

ສ້າງປະຫວັດການດໍາລົງຊີວິດທຸກຢ່າງຂອງທ່ານສົມບັດສົມພອນ

**ຄໍາແນະນໍາທີ 6**

ຈັດຕັ້ງປະຕິບັດຍຸດທະສາດການສືບສວນສອບສວນເພື່ອຮັບປະກັນໃຫ້ໄດ້ຂໍ້ມູນທີ່ກ່ຽວຂ້ອງທັງໝົດ ແລະ ນໍາມາວິເຄາະຢ່າງ ເປັນລະບົບ, ຂໍ້ມູນລວມມີພາບບັນທຶກໃນກ້ອງວົງຈອນປິດ, ແລະ ມັນຈະເປັນການດີຖ້າຫາກວ່າຂໍ້ມູນເຫລົ່ານັ້ນໄດ້ຖືກສົ່ງ ໃຫ້ຊ່ຽວຊານອິດສະຫຼະທີ່ມີການຍອມຮັບດໍາເນີນການສືບສວນສອບສວນເພື່ອຈະໄດ້ຄົ້ນຫາເອົາຫຼັກຖານທີ່ສໍາຄັນຈາກຂໍ້ມູນ ດັ່ງກ່າວ.

**ຄຳແນະນຳທີ 7**

ຈັດຕັ້ງປະຕິບັດຍຸດທະສາດທາງໂທລະຄົມເພື່ອຈະໄດ້ຮັບ ແລະ ດຳເນີນການວິເຄາະທຸກຂໍ້ມູນຫຼັກຖານທີ່ກ່ຽວຂ້ອງເຊິ່ງຈະ ເປັນການຊ່ວຍໃນການຕັ້ງຄຳສອບຖາມ ແລະ ຕັ້ງຂໍ້ສົມມຸດຕິຖານທີ່ກ່ຽວກັບຄະດີໄດ້.

**ຄຳແນະນຳທີ 8**

ຮັບປະກັນໃຫ້ມີລະບົບການດຳເນີນງານທີ່ເຂັ້ມແຂງເພື່ອສ້າງຄວາມເຊື່ອໝັ້ນໃນການປະຕິບັດທຸກໜ້າທີ່ນັບຕັ້ງແຕ່ການເກັບລວບລວມ, ເກັບຮັກສາ, ແລະ ຄຸ້ມຄອງດູແລະຂໍ້ມູນ.

**ຄຳແນະນຳທີ 9**

ຮັບປະກັນໃຫ້ມີການນຳໃຊ້ຍຸດທະສາດທາງນິຕິວິທະຍາເພື່ອບໍລິຫານຈັດການຂໍ້ມູນທີ່ໄດ້ຄົ້ນພົບເຊິ່ງລວມມີສະຖານທີ່ກໍ່ອາດສະຍາກຳ, ພາຫະນະ, ແລະ ຊາກຊົບທີ່ໄດ້ພົບເຫັນ.

**ຄຳແນະນຳທີ 10**

ການກວດສອບທາງນິຕິວິທະຍາຕ້ອງໄດ້ຖືກດຳເນີນການຈາກເຈົ້າໜ້າທີ່ທາງອາສະຍາກຳໃນທີ່ເກີດເຫດ ຫຼື ຜູ້ຊ່ຽວຊານອື່ນໆ ຖ້າຫາກເຫັນວ່າມີຄວາມເໝາະສົມ

**ຄຳແນະນຳທີ 11**

ທຸກໆການສັນນະສູດຊາກສົບເພື່ອຄົ້ນຫາສາຍເຫດຂອງການຕາຍຖ້າຫາກພົບເຫັນສົບຜູ້ເສຍຊີວິດແມ່ນຄວນຈະໃຫ້ຊ່ຽວ ຊານດ້ານພະຍາດວິທະຍາທີ່ໄດ້ຮັບການຍອມຮັບຈາກສາກົນເປັນຜູ້ດຳເນີນການໂດຍປະຕິບັດໄປຕາມມາດຕະຖານສາກົນ.

**ຄຳແນະນຳທີ 12**

ເກັບຮວບລວມຂໍ້ມູນທາງດ້ານການເງິນຂອງທ່ານ ສົມບັດ ສົມພອນທັງໝົດ

**ຄຳແນະນຳທີ 13**

ຮວບລວມຂໍ້ມູນດ້ານການເງິນຂອງຜູ້ທີ່ຕ້ອງສົງໃສທຸກຄົນທີ່ໄດ້ມາຈາກການສືບສວນສອບສວນ

**ຄຳແນະນຳທີ 14**

ພັດທະນາຍຸດທະສາດທີ່ກ່ຽວກັບພະຍານເພື່ອເພີ່ມໂອກາດໃນການຄົ້ນຫາພະຍານຜູ້ທີ່ສາມາດໃຫ້ຂໍ້ມູນກ່ຽວກັບເງື່ອນງຳຂອງທ່ານ ສົມບັດສົມພອນ ແລະ ຜູ້ທີ່ກ່ຽວຂ້ອງໄດ້.

**ຄຳແນະນຳທີ 15**

ໃຫ້ບູລິມະສິດໃນການເອົາຄຳໃຫ້ການຈາກ ທ່ານນາງ Ng Shui Meng, ເຈົ້າໜ້າທີ່ທີ່ ປະຈຳຢູ່ປ້ອມຕຳຫຼວດ ແລະ ພະຍານອື່ນໆທີ່ທາງຕຳຫຼວດສືບສວນສອບສວນເຫັນວ່າຈຳເປັນ.

**ຄຳແນະນຳທີ 16**

ຮຽບລຽງລຳດັບຂອງເຫດການຄືນ

**ຄຳແນະນຳທີ 17**

ຊອກຫາການຊ່ວຍເຫຼືອຈາກພາຍນອກເພື່ອດຳເນີນທາງນິຕິວິທະຍາ ແລະ ວິເຄາະສະຖານທີ່ເກີດເຫດ, ພາຫະນະ, ຫຼັກຖານທາງດ້ານຮ່າງກາຍ, ໂທລະສັບ, ຂໍ້ມູນທາງກ້ອງວົງຈອນປິດ ແລະ ອື່ນໆ.

**ຄຳແນະນຳທີ 18**

ພະຍາຍາມໃຫ້ການຮ່ວມມືກັບຕຳຫຼວດສາກົນໃນການຄົ້ນຫາທ່ານ ສົມບັດ ສົມພອນໃຫ້ທົ່ວໃນເຂດອາຊີຕາເວັນອອກສຽງໄຕ້.

**ຄຳແນະນຳທີ 19**

ໃຫ້ການຮັບປະກັນແກ່ການກວດສອບຄືນໃໝ່ຂອງຂອບເຂດ, ວິທີການປະຕິບັດ ແລະ ຜົນທີ່ໄດ້ຈາກການສືບສວນສອບສວນທີ່ຜ່ານມາວ່າໄດ້ຖືກດຳເນີນການຈາກອົງກອນທີ່ມີຄວາມສາມາດ, ມີອິດສະຫລະ ແລະ ກ່ຽວຂ້ອງຫຼືບໍ່. ອົງກອນທີ່ກ່ຽວນີ້ຕ້ອງມີສິດໃນການຂໍຂໍ້ມູນ, ສອບຖາມຜູ້ທີ່ກ່ຽວຂ້ອງ, ແລະ ສາມາດໃຫ້ຄຳແນະນຳໄດ້. ເຈົ້າໜ້າທີ່ ແລະ ຜູ້ຊ່ຽວຊານທຸກຄົນທີ່ກ່ຽວຂ້ອງໃນການດຳເນີນການທີ່ຜ່ານມາຕ້ອງໃຫ້ການຮ່ວມມື ແລະ ໃຫ້ຂໍ້ມູນແກ່ອົງກອນອິດສະຫລະເພື່ອຈະໄດ້ດຳເນີນການຕໍ່ໄປ.

## ເອກະສານຊ້ອຍທ້າຍ 2–ການລຽງລຳດັບເຫດການທີ່ສຳຄັນ

ໃນວັນທີ 15 ທັນວາ 2012, ເວລາປະມານ 17:30 ທ່ານ ສົມບັດ ພ້ອມກັບພັນລະຍາ Ng Shui Meng ໄດ້ເດີນ ທາງອອກຈາກຫ້ອງການພ້ອມກັນໂດຍນຳໃຊ້ລົດຄົນລະຄັນເພື່ອກັບບ້ານ. Ng Shui Meng ໄດ້ຂັບລົດນຳໜ້າໄປກ່ອນ ແລະ ທ່ານ ສົມບັດຂັບລົດຈິບຕາມຫຼັງມາ, ປ້າຍລົດຈິບແມ່ນ 2624.

Ng Shui Meng ໄດ້ໄປຮອດບ້ານປະມານ 18:00 ແລະ ກໍ່ນັ່ງລໍຖ້າສາມີຢູ່ທີ່ບ້ານ. ຕັ້ງແຕ່ນັ້ນມາ ທ່ານ ສົມບັດກໍບໍ່ໄດ້ ກັບມາບ້ານເລີຍ. ຍ້ອນຄວາມເປັນຫ່ວງສາມີ Ng Shui Meng ຈຶ່ງໄດ້ຂັບລົດຕະເວັນຊອກຫາ ສາມີຢູ່ທຸກທີ່ ແລະ ໄດ້ໄປຊອກຫາຢູ່ທີ່ໂຮງໝໍຕ່າງໆ ແລະກໍ່ຍັງບໍ່ເຫັນສາມີ.

ໃນວັນທີ 16 ທັນວາ 2012 ທ່ານນາງ Ng Shui Meng ໄດ້ເຂົ້າໄປແຈ້ງຄວາມກັບເຈົ້າໜ້າຕຳຫຼວດນະ ຄອນບານ–ນະຄອນຫຼວງວຽງຈັນ ແລະ ຫ້ອງການບ້ານຕົນເອງວ່າສາມີໄດ້ຫາຍຕົວໄປ.

ໃນວັນທີ 17 ທັນວາ 2012 ເຈົ້າໜ້າທີ່ຕຳຫຼວດນະຄອນບານຄະຄອນຫຼວງກໍ່ໄດ້ນຳເອົາພາບບັນທຶກຈາກກ້ອງວົງຈອນ ປິດຂອງຕຳຫຼວດທີ່ຢູ່ໄກ້ກັບປ້ອມຕຳຫຼວດບ່ອນທີ່ເກີດເຫດ ໃນວັນທີ 15 ທັນວາ 2012 ມາສາຍໃຫ້ຄອບຄົວ ທ່ານນາງ Ng Shui Meng ເບິ່ງ. ແລະ ທາງຄອບຄົວກໍ່ໄດ້ເຫັນພາບໃນກ້ອງໃນຕອນທີ່ ທ່ານ ສົມບັດສົມພອນກຳລັງຂັບລົດຈິບ ໄປຕາມຖະໜົນທ່າເດື່ອ ໃນວັນທີ 12 ທັນວາ 2012.

ພາບບັນທຶກຍັງໄດ້ສາຍໃຫ້ເຫັນວ່າລົດຈິບຂອງ ທ່ານ ສົມບັດ ສົມພອນໄດ້ຖືກສັ່ງໃຫ້ຢຸດໂດຍເຈົ້າໜ້າທີ່ຕຳຫຼວດຈາລະຈອນ ທີ່ປ້ອມຕຳຫຼວດ ຫຼັກ 3 ຖະໜົນທ່າເດື່ອ ເວລາ 18: 03. ທ່ານສົມບັດໄດ້ມອດຕາລົດ ແລະ ຍ່າງອອກຈາກລົດ ມຸ້ງໜ້າໄປ ຫາເຈົ້າໜ້າທີ່ຕຳຫຼວດດັ່ງກ່າວ. ຕໍ່ມາບໍ່ດົນກໍ່ມີຜູ້ຊາຍທີ່ບໍ່ສາມາດລະບຸໄດ້ວ່າແມ່ນໃຜໄດ້ຂັບຂີ່ລົດຈັກມາຮອດທີ່ເກີດເຫດ ແລະ ຈອດລົດຕົນໜ້າລົດຂອງທ່ານ ສົມບັດ ແລ້ວຍ່າງເຂົ້າໄປໃນປ້ອມຕຳຫຼວດ. ຕໍ່ມາປະມານ 2–3 ນາທີກໍ່ໄດ້ມີຜູ້ຊາຍ ທີ່ບໍ່ສາມາດລຸບຸໄດ້ອີກຄົນໜຶ່ງຍ່າງອອກມາຈາກປ້ອມຕຳຫຼວດ ແລ້ວຂັບຂີ່ເອົາລົດທ່ານ ສົມບັດອອກໄປ.

ຫຼັງຈາກນັ້ນໄດ້ມີລົດກະບະສີຂາວທີ່ເປີດໄຟສີ່ຍານຂັບມາຈອດຢູ່ໜ້າປ້ອມຕຳຫຼວດ. ຕາມພາບບັນທຶກແມ່ນມີຜູ້ຊາຍສອງ ຄົນ ແລະ ທ່ານ ສົມບັດໄດ້ຟ້າວຂຶ້ນລົດກະບະຄັນດັ່ງກ່າວແລ້ວຂັບອອກໄປຢ່າງຟ້າວຟັ່ງ ແລະ ມີຜູ້ຊາຍອີກສອງຄົນຂັບລົດ ຈັກນຳກົ້ນລົດກະບະຄັນນັ້ນໄປ.

ທາງສະມາຊິກຄອບຄົວທ່ານ ສົມບັດ ແລະ ພະນັກງານຫ້ອງການໄດ້ຮັບອານຸຍາດບັນທຶກພາບເຫດການນັ້ນດ້ວຍກ້ອງ ແລະ ດ້ວຍໂທລະສັບມືຖື.

ຕັ້ງແຕ່ໄດ້ມີການລາຍງານການຫາຍສາບສູບຂອງສາມີໃຫ້ແກ່ເຈົ້າໜ້າທີ່ປະຈຳນະຄອນຫຼວງວຽງຈັນ, Ng Shui Meng ໄດ້ຮັບການຕິດຕໍ່ຈາກທາງຕຳຫຼວດພຽງແຕ່ 4 ຄັ້ງ. ໃນແຕ່ລະຄັ້ງທີ່ໄດ້ເຂົ້າພົບກັບຕຳຫຼວດ, ພະນັກງານ ສືບສວນສອບສວນກໍ່ບໍ່ເຄີຍສອບຖາມຫຍັງກ່ຽວກັບການຫາຍຕົວໄປຂອງສາມີເລີຍ. ຖ້າຖາມກໍ່ແມ່ນໃນເລື່ອງທີ່ບໍ່ກ່ຽວ ຂ້ອງເຊັ່ນ: ຖາມສະພາບຄອບຄົວ ແລະ ມີລູກຈັກຄົນ.

**ຕັ້ງແຕ່ທ່ານສົມບັດຫາຍໄປ, ທາງການລາວໄດ້ອອກຄຳຖະແຫຼງ 4 ຄັ້ງ ແລະ ຈາກພາກສ່ວນຕຳຫຼວດ 3 ຄັ້ງ ກ່ຽວກັບ ຄວາມຄືບໜ້າຂອງບັນຫາ. ຄຳຖະແຫຼງຕ່າງໆມີຄື:**

**ຄຳຖະແຫຼງທີ່ເປັນທາງການຈາກລັດຖະບານລາວ ອອກໃນວັນທີ 3 ທັນວາ 2014**

- ວັນທີ 19 ທັນວາ 2012–ໂຄຊົກລັດຖະບານໄດ້ແຈ້ງວ່າການດຳເນີນການສືບສວນສອບສວນກຳລັງໄດ້ດຳເນີນຢູ່ ພ້ອມທັງກ່າວວ່າການຫາຍສາບສູນນັ້ນແມ່ນອາດກ່ຽວຂ້ອງກັບຄວາມຂັດແຍ່ງສ່ວນຕົວ ຫຼື ບັນຫາດ້ານຜົນປະໂຫຍດ.
- ວັນທີ 4 ມັງກອນ 2013–ທ່ານເອກອັກຄະລັດສະທູດປະຈຳສຳນັກງານອົງການສະຫະປະຊາຊາດທີ່ນະຕອນເຈນນິວາໄດ້ ກ່າວວ່າການສືບສວນສອບສວນແມ່ນໄດ້ຮີບຮ້ອນ ແລະ ກໍ່ບໍ່ໄດ້ໃຫ້ຄຳເຫັນໃດໆວ່າໄດ້ພົບເຫັນ ຫຼື ພົບພໍ້ຫຍັງແດ່ແລ້ວ
- ວັນທີ 17 ມັງກອນ 2013– ທ່ານ ພົງສະວັດ ບຸບຜາ ທີ່ເປັນລັດຖະມົນຕີ ແລະ ຫົວໜ້າຫ້ອງການລັດຖະບານໄດ້ຊີ້ແຈງ ໃນສະພາອາຊຽນວ່າທາງລັດຖະບານລາວແມ່ນບໍ່ໄດ້ກ່ຽວຂ້ອງກັບສິ່ງທີ່ເກີດ (ຢູ່ທີ່ຟີລິບປິນ, ມາເລເຊຍ, ອິນໂດເນເຊຍ)
- ວັນທີ 30 ມັງກອນ 2013–ທ່ານທອງພັນ ສະຫວັນເພັດທີ່ເປັນເອກອັກຄະລັດສະທູດ ແລະ ຜູ້ແທນຂອງ ສປປ ລາວປະຈຳນະຄອນເຈນນິວາຊີ້ແຈງວ່າໜັງສືແຈ້ງທີ່ທາງຫ້ອງການ–ບົດລາຍງານພິເສດຂອງອົງການສະຫະປະຊາ ຊາດທີ່ມີຄຳເຫັນຈາກທ່ານ Frank La RueF Maina Kiai ແລະ ທ່ານນາງ Margaret Sekaggya ກ່ຽວກັບລົດຈິບ ແລະ ເລື່ອງລາວທີ່ກ່ຽວຂ້ອງກັບທ່ານ ສົມບັດນັ້ນແມ່ນບໍ່ມີຄວາມຖືກຕ້ອງ.

**ບົດລາຍງານຈາກຕຳຫຼວດອອກໃນວັນທີ 3 ທັນວາ 2014**

- ໃນວັນທີ 11 ມັງກອນ 2013–ບົດລາຍງານທຳອິດຂອງຕຳຫລວດລາຍງານວ່າບໍ່ໄດ້ມີພາບບັນທຶກໃດໆກ່ຽວກັບທ່ານ ສົມບັດສົມພອນຢູ່ໃນຫ້ອງວີງຈອນປິດເລີຍ. ຕຳຫຼວດຈໍລະຈອນທີ່ປ້ອມຕຳຫຼວດກໍ່ໃຫ້ການວ່າບໍ່ໄດ້ມີເຫດ ການໃດໆເກີດຂຶ້ນ ໃນຕອນແລງວັນທີ 15 ທັນວາ 2012. ໃນການລາຍງານກໍ່ບໍ່ໄດ້ຊີ້ແຈງໃຫ້ເຫັນວ່າ ຕຳຫຼວດໄດ້ສອບຖາມຜູ້ອື່ນໆທີ່ ເຫັນເຫດການນຳຫຼືບໍ່
- ວັນທີ 2 ມີນາ 2013–ການລາຍງານຄັ້ງທີສອງໂດຍທ່ານ ພົນເອກ ເພງສະຫວັນ ທິບພະວົງໄຊວ່າ ທາງການລາວບໍ່ສາ ມາດຄົ້ນຫາລົດຈິບຂອງທ່ານສົມບັດສົມພອນໄດ້ ແລະ ໄດ້ເວົ້າອີກວ່າການຄົ້ນຫາແມ່ນມີຄວາມ ຄືບໜ້າ ແຕ່ບໍ່ໄດ້ລະ ບຸວ່າອັນໃດ. ນອກນີ້ທ່ານພົນເອກຍັງເວົ້າຕື່ມອີກວ່າທາງການລາວຈະພະຍາຍາມຫາຄວາມຊ່ວຍເຫຼືອ ຈາກພາຍນອກຕື່ມ.
- ວັນທີ 8 ມິຖຸນາ 2013–ການລາຍງານຄັ້ງທີ 3 ໄດ້ຈີ້ແຈງໃຫ້ເຫັນຄວາມຄືບໜ້າທີ່ມີການຮ່ວມມືກັບສາກົນ ແລະ ໄດ້ລາຍງານໃຫ້ຕຳຫຼວດສາກົນຮັບຊາບພ້ອມທັງໝາຍຊື່ຂອງທ່ານສົມບັດເປັນສີເຫຼືອງວ່າທ່ານສົມບັດຕົກເປັນບຸກຄົນທີ່ ຫາຍສາບສູນ. ການລາຍງານຍັງໄດ້ຊີ້ແຈງອີກຕື່ມວ່າໃນປະຈຸບັນທາງການຂອງປະເທດຍີ່ປຸ່ນ, ອິນເດຍ, ຝຣັ່ງ, ເກົາຫຼີ ໄຕ້, ສະຫະລັດ ແລະ ປະເທດສະເປັນໄດ້ຕອບຮັບທີ່ຈະຊ່ວຍເຫຼືອການຄົ້ນຫາທ່ານ ສົມບັດສົມພອນ. ໃນການລາຍງານຄັ້ງ ນີ້ກໍ່ບໍ່ໄດ້ບອກໃຫ້ເຫັນຄວາມຄືບໜ້າໃດໆຕື່ມອີກ.

ວັນທີ 4 ກັນຍາ 2013, ທ່ານນາງ Ng Shui Meng ໄດຍື່ນຄຳຮ້ອງຟ້ອງໄປຍັງໄອຍະການສູງເພື່ອສະເໜີ ໃຫ້ສານນະຄອນຫຼວງທຳການພິຈາລະນາເຈົ້າໜ້າທີ່ທາງກົດໝາຍທີ່ໄດ້ມີປະຕິກິລິຍາບໍ່ເໝາະສົມ ແລະ ກໍ່ບໍ່ໃຫ້ທ່ານນາງ Ng Shui Meng ຂໍກ໊ອບປີ້ຂໍ້ມູນຄວາມຄືບໜ້າຂອງໃນການຄົ້ນຫາສາມີ.

ໃນເດືອນມັງກອນ 2014 ທ່ານນາງ Ng Shui Meng ໄດ້ນຳຕິດຕາມຄຳຮ້ອງຟ້ອງດັ່ງກ່າວແຕ່ສຸທ້າຍພະນັກງານ ຂອງອຍະການສູງໄດ້ບອກວ່າຄຳຮ້ອງນັ້ນໄດ້ເສຍແລ້ວ. ທາງຫ້ອງການຄະນະກຳມາທິການກົດໝາຍສາກົນເອງກໍ່ໄດ້ຂຽນໜັງສືໄປຫາຫົວໜ້າໄອຍະການສູງໃນວັນທີ 22 ກໍລະກົດ 2014 ເພື່ອຂໍຄວາມຄືບໜ້າຂອງຄຳຮ້ອງຟ້ອງຂອງທ່ານນາງ Ng Shui Meng ແລະມາຮອດປະຈຸບັນໄອຍະການ ສູງກໍ່ຍັງບໍ່ໄດ້ມີຄຳຕອບໃດໆກັບຄືນມາເລີຍ.

ໃນລະຫວ່າງວັນທີ 15–20 ກັນຍາ 2014, ສະພາສິດທິມະນຸດອາຊຽນໄດ້ເດີນທາງມາຍັງ ສປປ ລາວ ເພື່ອສອບຖາມ ຄວາມເປັນຈິງ ແລະ ນຳຕິດຕາມການຄົ້ນຫາທ່ານ ສົມບັດສົມພອນ. ຈາກການເດີນທາງມາກໍ່ສາມາດສະຫຼຸບໄດ້ວ່າ “ທາງ ລັດຖະບານລາວໄດ້ທຳການສ້າງກຳແພງດິນຈີ່ແຫ່ງຄວາມມິດງຽບກ່ຽວກັບການສືບສວນສອບສວນໄວ້, ອີງຕາມຂໍ້ມູນໄດ້ ຈາກໜ່ວຍສືບລາດສະການລັບກໍ່ໄດ້ເຫັນວ່າອັນທີ່ຈິງແລ້ວທາງການລາວແມ່ນບໍ່ເຄີຍໄດ້ດຳເນີນການສືບສວນສອບສວນ ໃດໆເລີຍ ແລະ ຍັງມີຄວາມພະຍາຍາມທີ່ຈະປົກປິດຄວາມຈິງວ່າທາງເຈົ້າໜ້າທີ່ຂອງລັດໄດ້ມີສ່ວນຮູ້ເຫັນໃນສິ່ງທີ່ເກີດຂຶ້ນ.”

## ເອກະສານອ້າງອີງ


1 http://sombath.org/globalconcern/statements/

2 APHR, 'ເກມການຫຼອກລວງໃນການສືບສວນສອບສວນຂອງລັດຖະບານລາວຄວນຍຸດຕິໄດ້ແລ້ວ, 23 ກັນຍາ 2014, http://www.aseanmp.org/?p=3101 (ເຂົ້າຫາຂໍ້ມູນວັນທີ 23 ກັນຍາ 2014)

3 ອານຸສັນຍາອິສຕັນບູທີ່ມີຊື່ຮຽກທົ່ວໄປວ່າຄູ່ມືການສືບສວນສອບສວນ ແລະ ເຮັດເອກະສານກ່ຽວກັບການ ທໍລະມານ ແລະ ການກະທຳທີ່ໄຮ້ມະນຸດສະທຳ, ປ່າເຖື່ອນ ແລະ ການລົງໂທດ ຫຼື ການປະຕິບັດທີ່ເຮັດໃຫ້ເສຍກຽດສັກສີ, http://www.ohchr.org/documents/publications/training8erv1en.pdf

4. ຄູ່ມືຂອງອົງການສະຫະປະຊາຊາດວ່າດ້ວຍການປ້ອງກັນ ແລະ ການສືບສວນສອບສວນຢ່າງມີປະສິດ ທິພາບຂອງການດຳເນີນຄະດີສະເພາະ, UN Doc E/ST/CSD+A/.l2, l99l, http://www.unrol.org/ files/UN_ Manual_on_the_Effective_Prevention_and_Investigation% 5Bl%5D.pdf

5. ມາຕາ 12 ວັກ 3 (A) ຂອງສົນທິສັນຍາ ICPPED ແລະ ມາດຕາ ຢໂ; ວັກ 2 ຂອງຖະແຫຼງການວ່າດ້ວຍ ການປ້ອງກັບຸກຄົນທຸກຄົນບໍ່ໃຫ້ຖືກບັງຄັບໃຫ້ຫາຍສາບສູນ

6. ການລຽງລຳດັບເຫດການທີ່ສຳຄັນໃນເອກະສານຊ້ອນທ້າຍທີ 2. ຂໍ້ມູນທີ່ກ່ຽວຂ້ອງທີ່ສາທາລະນະສາ ມາດເຂົ້າເຖິງແມ່ນຖືກລວມໄວ້ໃນ: http://sombath.org/category/laogovernmentstatements/

7. ພາບວິດີໂອໃນກ້ອງວົງຈອນປິດສາມາດເບິ່ງໄດ້ທີ່: http://www.youtube.com/watch?v=VB29Jr02748 (ເຂົ້າຫາຂໍ້ມູນວັນທີ 2 ທັນວາ 2014)

8. ການວິເຄາະທັງໝົດໃນຂອບເຂດດ້ານກົດໝາຍທີ່ນຳໃຊ້ໃນຄະດີການຖືກບັງຄັບໃຫ້ຫາຍສາບສູນຂອງ ທ່ານສົມບັດສົມພອນ, ເວບໄຊຂອງ ICJ: ບົດບັນທຶກທາງກົດໝາຍຂອງຄະດີທ່ານສົມບັດສົມພອນ, 2013, http://icj.wpengine. netdna-cdn.com/wpcontent/uploads/2013/12/Legal- Memorandum-annex-onthecaseofSombathSomphone.pdf.

9. ໃຫ້ເບິ່ງເອກະສານຊ້ອນທ້າຍ ທີ 2

10. ICJ, ບົດບັນທຶກທາງກົດໝາຍຂອງຄະດີທ່ານສົມບັດສົມພອນ, 2013, http://icj.wpengine.netdna-cdn.com/wp-content/uploads/2013/12/Legal-Memorandumannex-on-the-case-of-SombathSomphone.pdf, paras. 812.

11. ມາຕາ2 (3),9,7,6, ຂອງສົນທິສັນຍາ ICCPR, ແລະ ມາດຕາ 12 ແລະ 13 ຂອງສົນທິສັນຍາ CAT, ຄະນະກຳມະການສິດທິມະນຸດ, ຄຳເຫັນທົ່ວໄປ 31, ພັນທະທາງກົດໝາຍທົ່ວໄປຂອງລັດພາຄີຂອງສົນທິສັນຍາ, UN Doc. CCPR/C/2l/Rev.l7/Add.l3, ວັນທີ 26 ພຶດສະພາ 2004, ວັກທີ l5 ແລະ l8, http://da ccess-dds-ny.un.org/doc/UND2C/GEN/G04/4l9/56/PD)/G044l956.pdf? openElement; ຄະນະກຳມະທິການສິດທິມະນຸດ, ຄຳເຫັນທົ່ວໄປ ເລກທີ 20, ການຫ້າມບໍ່ໃຫ້ມີການທໍລະມານ ຫຼື ການກະທຳທີ່ປ່າເຖື່ອນອື່ນໆ, ການຫ້າມບໍ່ໃຫ້ມີການລົງໂທດ ຫຼື ການກະທຳທີ່ເຮັດໃຫ້ເສຍກຽດສັກສີ ຫຼື ໄຮ້ມະນຸດສະທຳ, UN Doc. +RI/GEN/l/ Rev.9 (Vol.l), l992, http://www.unhchr.ch/tbs/doc. nsf/(Symbol)/692429l970754969cl2563ed004c8ae5?2pendocument, ວັກທີ l4; ຄະນະກຳມາທິການຕ້ານການທໍລະມານ, ຄຳເຫັນທົ່ວໄປ ເລກທີ 2, ການຈັດຕັ້ງປະຕິບັດມາດຕາ 2 ໂດຍລັດພາຄີ, UN Doc. CAT/C/GC/2, 24 January 2008, http:// tbinternet.ohchr.org/_layouts/treatybodyexternal/Download.asp x?symbolno CAT%2fC%2fGC%2 f2&Lang=en, ວັກທີ 9 ແລະ 26; ຄະນະກຳມາທິການຕ້ານການ ທໍລະມານ, ຄຳເຫັນທົ່ວໄປ ເລກທີ 3, ການຈັດຕັ້ງປະຕິບັດມາດຕາ 14 ໂດຍລັດພາຄີ, UN Doc. CAT/C/GC/3, l3 ທັນວາ 20l2, http://tbinternet.ohchr.org/_layouts/ treatybodyexternal/Download.asp x?symbolno CAT%2fC%2fGC%2f3&Lang en, ວັກທີ 46(i).

12. ຄະນະກຳມະທິການສິດທິມະນຸດ, ຄຳເຫັນທົ່ວໄປ ເລກທີ 31, ພັນທະທາງກົດໝາຍທົ່ວໄປຂອງລັດພາຄີຂອງ ສົນທິສັນຍາ UN Doc. CCPR/C/2l/Rev.l7/Add.l3, 26 May 2004, http://daccess-dds- ny.un.org/do c/UND2C/GEN/G04/4l9/56/PD)/G044l956.pdf?2penElement, ວັກທີ l5; ມາດຕາ l2 ແລະ 13 ຂອງສົນທິສັນຍາ CAT

13. ຄະນະກຳມາທິການຕ້ານການທໍລະມານ, ຄຳເຫັນທົ່ວໄປເລກທີ 2, ການຈັດຕັ້ງປະຕິບັດມາດຕາ 2 ໂດຍລັດ ພາຄີ, UN Doc.CAT/C/GC/2,24 ມັງກອນ 2008, http://tbinternet.ohchr.org/_layouts/treatybodyexternal/Download.aspx?symbolnoCAT%2fC%2fGC%2f2&Lang=en,ວັກທີ 26.
14. ມາດຕາ 6 (1)(b) ຂອງສົນທິສັນຍາ ICPPED; ມາດຕາ 2 (3) ຂອງສົນທິສັນຍາ CAT.
15. ມາດຕາ 6 (2) ຂອງສົນທິສັນຍາ ICPPED.
16. ທ່ານ ສົມບັດສົມພອນ Sombath Somphone, 'ຄຳຖະແຫຼງຂອງລັດຖະບານລາວ, http://sombath. org/category/lao-government-statements/ (ເຂົ້າຫາຂໍ້ມູນໃນວັນທີ 3 ທັນວາ 2014)
17. ຄູ່ມືຂອງອົງການສະຫະປະຊາຊາດວ່າດ້ວຍປ້ອງກັນ ແລະ ການສືບສວນສອບສວນທີ່ມີປະສິດທິພາບໃນການ ນຳໃຊ້ໝາຍ ພິເສດ, ການດຳເນີນຄະດີໂດຍພະລັກການ ແລະ ການປະຫານຊີວິດ UN Doc E/ST/CSD+A/.l2, l99l, http://www.unrol.org/files/UN_Manual_on_the_ Effective_Prevention_and _Investiga tion%5Bl%5D.pdf, ບົດທີ IV.
18. ມາດຕາ 12 ວັກ 3(a) ຂອງສົນທິສັນຍາ ICPPED ແລະ ມາດຕາ 13; ວັກ 2 ຂອງຖະແຫຼງການ ວ່າດ້ວຍການປົກປ້ອງຄົນທຸກຄົນບໍ່ໃຫ້ຕົກເປັນຜູ້ຖືກບັງຄັບໃຫ້ສາຍສາບສູນ
19. ຄືກັນກັບມາດຕາ 18
20. ICJ, ບົດບັນທຶກທາງກົດໝາຍຂອງຄະດີທ່ານສົມບັດສົມພອນ, 2013, http://icj.wpengine.net dna-cdn. com/wpcontent/uploads/2013/12/LegalMemorandumannexon-thecase-ofSombath-Somphone.pdf, ວັກທີ 42.
21. ຄືກັນກັບມາດຕາ 20, Epilogue, ໜ້າທີ 19.
22. APHR, 'ເກມການຫຼອກລວງຂອງລັດຖະບານລາວກ່ຽວກັບການສືບສວນສອບສວນເລື່ອງຂອງທ່ານສົມບັດ ຕ້ອງຍຸດຕິລົງ', 23 ທັນວາ 20l4, http://www.aseanmp.org/?p3l0l (ເຂົ້າຫາຂໍ້ມູນວັນທີ 3 ທັນວາ 20l4)

**Commission Members**
November 2015 (for an updated list, please visit www.icj.org/commission)

**President:**
Prof. Sir Nigel Rodley, United Kingdom

**Vice-Presidents:**
Prof. Robert Goldman, United States
Justice Michèle Rivet, Canada

**Executive Committee:**
Prof. Carlos Ayala, Venezuela
Justice Azhar Cachalia, South Africa
Prof. Jenny E. Goldschmidt, Netherlands
Ms Imrana Jalal, Fiji
Ms Hina Jilani, Pakistan
Justice Radmila Dicic, Serbia

**Other Commission Members:**
Prof. Kyong-Wahn Ahn, Republic of Korea
Justice Adolfo Azcuna, Philippines
Mr Muhannad Al-Hassani, Syria
Dr. Catarina de Albuquerque, Portugal
Mr Abdelaziz Benzakour, Morocco
Justice Ian Binnie, Canada
Justice Sir Nicolas Bratza, UK
Prof. Miguel Carbonell, Mexico
Justice Moses Chinhengo, Zimbabwe
Prof. Andrew Clapham, UK
Justice Elisabeth Evatt, Australia
Mr Roberto Garretón, Chile
Prof. Michelo Hansungule, Zambia
Ms Gulnora Ishankanova, Uzbekistan
Mr. Shawan Jabarin, Palestine
Justice Kalthoum Kennou, Tunisia
Prof. David Kretzmer, Israel
Prof. César Landa, Peru
Justice Ketil Lund, Norway
Justice Qinisile Mabuza, Swaziland
Justice José Antonio Martín Pallín, Spain
Justice Charles Mkandawire, Malawi
Mr Kathurima M'Inoti, Kenya
Justice Yvonne Mokgoro, South Africa
Justice Sanji Monageng, Botswana
Tamara Morschakova, Russia
Prof. Vitit Muntarbhorn, Thailand
Justice Egbert Myjer, Netherlands
Justice John Lawrence O'Meally, Australia
Justice Fatsah Ouguergouz, Algeria
Dr Jarna Petman, Finland
Prof. Victor Rodriguez Rescia, Costa Rica
Mr Belisario dos Santos Junior, Brazil
Prof. Marco Sassoli, Italy-Switzerland
Justice Ajit Prakash Shah, India
Mr Raji Sourani, Palestine
Justice Philippe Texier, France
Justice Stefan Trechsel, Switzerland
Prof. Rodrigo Uprimny Yepes, Colombia

icj

International
Commission
of Jurists

ຄະນະກຳມາທິການ
ກົດໝາຍສາກົນ
10/1 ຊອຍ ອະລີ 2
ຖະໜົນພະຫົນໂຍທິນ
ສາມແສນໄທ ພະຍາໄທ
ປະເທດໄທ

ໂທ: 662 619 8477
662 619 8478
ແຟກ: 662 619 8479